ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພະລັງງານ ແລະ ບໍ່ແຮ່

ຫ້ອງການ

ເລກທີ 1265 /ພບ.ຫກ

ນະຄອນຫຼວງວຽງຈັນ, ວັນທີ 02 JUN 2021

ເລກທີ 0946
ວັນທີ 04/6/21

ກະຊວງອຸດສາຫະກຳ ແລະ ການຄ້າ
1287
ວັນທີ 7.6.21

# ໜັງສືສະເໜີ

**ຮຽນ:** ທ່ານ ຫົວໜ້າຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ

ທີ່ນັບຖື,

**ເລື່ອງ:** ສະເໜີຂໍພິຈາລະນາອອກໜັງສືແຈ້ງໂຈະຊົ່ວຄາວ ໃນການອອກໃບທະບຽນວິສາຫະກິດ ໃຫ້ບໍລິສັດທີ່ມີຈຸດປະສົງຂໍດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ.

- ອີງຕາມ ກົດໝາຍວ່າດ້ວຍແຮ່ທາດ (ສະບັບປັບປຸງ) ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017;
- ອີງຕາມ ບົດບັນທຶກກອງປະຊຸມ ລັດຖະມົນຕີ-ຮອງລັດຖະມົນຕີ ແລະ ກົມວິຊາການ, ຄັ້ງວັນທີ 26 ເມສາ 2021.

ຫ້ອງການ, ກະຊວງພະລັງງານ ແລະ ບໍ່ແຮ່ ຂໍສະເໜີມາຍັງ ທ່ານ ຊາບວ່າ: ໂດຍປະຕິບັດຕາມເນື້ອໃນ ບົດບັນທຶກກອງປະຊຸມລັດຖະມົນຕີ-ຮອງລັດຖະມົນຕີ ແລະ ກົມວິຊາການ ຂອງກະຊວງພະລັງງານ ແລະ ບໍ່ແຮ່ ຄັ້ງວັນທີ 26 ເມສາ 2021, ຊຶ່ງກອງປະຊຸມໄດ້ເຫັນດີເປັນເອກະພາບ ໃຫ້ໂຈະການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຈົນກວ່າຈະມີແຈ້ງການໃຫ້ອະນຸຍາດໃໝ່ ເນື່ອງຈາກປະຈຸບັນນີ້ ແມ່ນໄດ້ອະນຸມັດໄປຫຼາຍບໍລິສັດດຳເນີນທຸລະກິດດັ່ງກ່າວ ແຕ່ເຫັນວ່າ ບໍ່ມີປະສິດທິຜົນເທົ່າທີ່ຄວນ, ຈະໄດ້ມີການປະເມີນຄືນການຈັດຕັ້ງປະຕິບັດວຽກງານ ຂອງບັນດາບໍລິສັດທີ່ໄດ້ຮັບອະນຸຍາດຜ່ານມາ. ກະຊວງພະລັງງານ ແລະ ບໍ່ແຮ່ ຈະພິຈາລະນາອອກອະນຸຍາດບໍລິການທີ່ຕິດພັນກ່ຽວກັບທຸລະກິດແຮ່ທາດຕື່ມອີກ ພາຍຫຼັງໄດ້ມີການປັບປຸງມາດຕະຖານ ແລະ ເງື່ອນໄຂການອອກອະນຸຍາດກ່ອນ, ຊຶ່ງປະຈຸບັນແມ່ນກຳລັງສ້າງ ຂໍ້ຕົກລົງ ວ່າດ້ວຍທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ທີ່ກຳລັງຈະສຳເລັດ ແລະ ປະກາດໃນທ້າຍປີ 2021ນີ້.

ສະນັ້ນ, ເພື່ອເຮັດໃຫ້ວຽກງານການຄຸ້ມຄອງການດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ໃຫ້ມີປະສິດຖິພາບ ແລະ ຄວາມສອດຄ່ອງໄປໃນທິດທາງດຽວກັນ ລະຫວ່າງ ກະຊວງພະລັງງານ ແລະ ບໍ່ແຮ່ ກັບ ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງສະເໜີມາຍັງ ທ່ານ ເພື່ອພິຈາລະນາອອກແຈ້ງການໂຈະຊົ່ວຄາວໃນການອອກທະບຽນວິສາຫະກິດໃຫ້ແກ່ບໍລິສັດທີ່ມີຈຸດປະສົງດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຈົນກວ່າກະຊວງພະລັງງານ ແລະ ບໍ່ແຮ່ ຈະສ້າງນິຕິກຳທີ່ຕິດພັນກັບວຽກງານດັ່ງກ່າວສຳເລັດ.

ດັ່ງນັ້ນ, ຈຶ່ງຂໍສະເໜີມາຍັງ ທ່ານ ພິຈາລະນາ ຕາມເຫັນສົມຄວນດ້ວຍ.

**ຫົວໜ້າຫ້ອງການ**

ສຳເນົາ-ສົ່ງ:

| | |
|---|---|
| - ກົມຄຸ້ມຄອງບໍ່ແຮ່, ກະຊວງ ພບ | 1 ສະບັບ; |
| - ກົມກວດກາ, ກະຊວງ ພບ | 1 ສະບັບ; |
| - ເກັບມ້ຽນ | 1 ສະບັບ. |

ເພັດສະຫວັນ ລັດຕະນະທິງໄຊ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພະລັງງານ ແລະ ບໍ່ແຮ່

ເລກທີ 1532/ພບ

ນະຄອນຫຼວງວຽງຈັນ, ວັນທີ 13 ຕຸລາ 2020

# ແຈ້ງການ

ເຖິງ: - ກົມຄຸ້ມຄອງບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່;
- ພະແນກພະລັງງານ ແລະ ບໍ່ແຮ່ ປະຈຳແຂວງ/ນະຄອນຫຼວງ;
- ບໍລິສັດ ລົງທຶນດ້ານບໍ່ແຮ່.

**ເລື່ອງ:** ໂຈະຊົ່ວຄາວ ການອອກໃບອະນຸຍາດດຳເນີນກິດຈະການສະເພາະ ຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ.

- ອີງຕາມກົດໝາຍວ່າດ້ວຍແຮ່ທາດ (ສະບັບປັບປຸງ) ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017.
- ອີງຕາມບົດລາຍງານຂອງກົມຄຸ້ມຄອງບໍ່ແຮ່ ສະບັບເລກທີ 2667/ພບ.ກຄຣ3, ລົງວັນທີ 05 ຕຸລາ 2020.

**ກະຊວງພະລັງງານ ແລະ ບໍ່ແຮ່ ອອກແຈ້ງການ ດັ່ງນີ້:**

1. ໃຫ້ໂຈະຊົ່ວຄາວ ການອອກໃບອະນຸຍາດດຳເນີນກິດຈະການສະເພາະ ຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ. ສ່ວນການຕໍ່ໃບອະນຸຍາດໃຫ້ບໍລິສັດທີ່ໄດ້ອະນຸມັດໄປກ່ອນນັ້ນ ແມ່ນໃຫ້ກວດກາຄືນຢ່າງລະອຽດ, ຖ້າບໍລິສັດໃດປະຕິບັດສອດຄ່ອງຕາມລະບຽບການທີ່ໄດ້ກຳນົດໄວ້ກໍ່ໃຫ້ສືບຕໍ່ ໂດຍໃຫ້ຖືສັນຍາຊື້-ຂາຍແຮ່ທາດ ທີ່ຍັງມີຜົນສັກສິດເປັນຫຼັກ.
2. ມອບໃຫ້ ກົມຄຸ້ມຄອງບໍ່ແຮ່ ແລະ ພະແນກພະລັງງານ ແລະ ບໍ່ແຮ່ ປະຈຳແຂວງ/ນະຄອນຫຼວງ ແຈ້ງສິ້ນສຸດອາຍຸນຳໃຊ້ໃບອະນຸຍາດດຳເນີນກິດຈະການສະເພາະ ຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ທີ່ໄດ້ໝົດອາຍຸນຳໃຊ້ແລ້ວ ເພື່ອປ້ອງກັນການສວຍໃຊ້ໃບອະນຸຍາດດັ່ງກ່າວໄປທາງທີ່ບໍ່ສອດຄ່ອງຕໍ່ລະບຽບກົດໝາຍ.
3. ມອບໃຫ້ກົມຄຸ້ມຄອງບໍ່ແຮ່ ສົມທົບກົມນິຕິກຳ ຮີບຮ້ອນປັບປຸງລະບຽບການທີ່ຕິດພັນກັບວຽກງານ ການຊື້-ຂາຍ, ການນຳເຂົ້າ ແລະ ສົ່ງອອກແຮ່ທາດ ເພື່ອໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍແຮ່ທາດ ແລະ ຕາມສະພາບຄວາມຈິງ ເປັນຕົ້ນແມ່ນ ຂໍ້ຕົກລົງຂອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ວ່າດ້ວຍການຊື້-ຂາຍ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ສະບັບເລກທີ 0481/ພບ, ລົງວັນທີ 20/4/2012, ຂໍ້ຕົກລົງວ່າດ້ວຍລະບຽບການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ສະບັບເລກທີ 0352/ພບ, ລົງວັນທີ 13/3/2012, ດຳລັດວ່າດ້ວຍການສົ່ງອອກຜະລິດຕະພັນແຮ່ທາດ ສະບັບເລກທີ 90/ນຍ, ລົງວັນທີ 9/6/2008 ແລະ ແຈ້ງການອື່ນໆທີ່ກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ ຈົນກວ່າຈະມີແຈ້ງການສະບັບໃໝ່ປ່ຽນແທນ.

**ລັດຖະມົນຕີ**

ດຣ.ຄຳມະນີ ອິນທິລາດ

**ສຳເນົາ-ສົ່ງ:**
- ກົມນິຕິກຳ, ກະຊວງ ພບ 1 ສະບັບ;
- ກົມກວດກາ, ກະຊວງ ພບ 1 ສະບັບ;
- ເກັບມ້ຽນ 2 ສະບັບ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະ ການລົງທຶນ
ກົມສົ່ງເສີມການລົງທຶນ
ຫ້ອງການບໍລິການການລົງທຶນປະຕູດຽວ

ເລກທີ 361...../ຫລປ.ລທ6
ນະຄອນຫຼວງວຽງຈັນ, ວັນທີ 04.09.2020

# ແຈ້ງການ

## ການໂຈະຮັບຄຳຮ້ອງຂໍລົງທຶນດ້ານບໍ່ແຮ່ ແຕ່ນີ້ ຮອດໝົດປີ 2020

-ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 08/ນຍ, ລົງວັນທີ 02 ກໍລະກົດ 2018
-ອີງຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 874/ຫສນຍ, ລົງວັນທີ 17 ສິງຫາ 2020.

ເພື່ອປະຕິບັດຕາມຄຳສັ່ງ ແລະ ແຈ້ງການດັ່ງກ່າວຂ້າງເທິງນັ້ນ, ກົມສົ່ງເສີມການລົງທຶນ ໃນນາມຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູກາງ (ຄລທ.ສ) ຂໍຖືເປັນກຽດແຈ້ງມາຍັງບັນດານັກທຸລະກິດ, ນັກລົງທຶນ, ໃນນາມບຸກຄົນ ແລະ ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ຊາບວ່າ: ແຕ່ນີ້ຮອດໝົດປີ 2020 ກົມສົ່ງເສີມການລົງທຶນ ໄດ້ໂຈະການຮັບຄຳຮ້ອງຂໍລົງທຶນດ້ານບໍ່ແຮ່ໄວ້ກ່ອນ ລວມທັງໂຄງການໃໝ່ ແລະ ໂຄງການເກົ່າ ທີ່ລັດຖະບານໄດ້ຍົກເລີກສັນຍາແລ້ວ ເພື່ອສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນບັນດາໂຄງການທີ່ລັດຖະບານໄດ້ອະນຸຍາດຜ່ານມາ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານເພື່ອຊາບດ້ວຍ.

ຫົວໜ້າກົມ
ຫົວໜ້າຫ້ອງການບໍລິການການລົງທຶນປະຕູດຽວ

ອຸດສະແກ້ວ ແກ້ວດວງສີນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 122 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 18 JUN 2021

# ແຈ້ງການ

ເຖິງ: ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດແລກປ່ຽນເງິນຕາ;

ເລື່ອງ: ໂຈະການຮັບເອກະສານຄຳຮ້ອງ ແລະ ການອອກໜັງສືອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ໃນຂອບເຂດທົ່ວປະເທດ.

- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014.

ຫ້ອງການ ທະນາຄານແຫ່ງ ສປປ ລາວ (ທຫລ), ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບທົ່ວເຖິງກັນວ່າ: ທຫລ ຈະໄດ້ໂຈະການຮັບເອກະສານຄຳຮ້ອງ ແລະ ການພິຈາລະນາອອກໜັງສືອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ໃນຂອບເຂດທົ່ວປະເທດ ນັບແຕ່ວັນລົງລາຍເຊັນໃນແຈ້ງການສະບັບນີ້ເປັນຕົ້ນໄປ ເພື່ອທົບທວນ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນໄລຍະຜ່ານມາ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງຢາກຂໍອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ໃນຕໍ່ໜ້າ ເພື່ອຊາບ.

ຫົວໜ້າຫ້ອງການ ທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ເລກທີ: 0897 /ກຄພນ.ກສລ
ນະຄອນຫຼວງວຽງຈັນ, ວັນທີ: 10 ພະຈິກ 2020

**ຮຽນ:** ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.

**ເລື່ອງ:** ສືບຕໍ່ປະຕິບັດ ແຈ້ງການ ຢຸດຕິຊົ່ວຄາວ ການຂຶ້ນທະບຽນວິສາຫະກິດທຸລະກິດ ການນຳເຂົ້າ ແລະ ຈຳໜ່າຍ ອາຍແກັສຫຸງຕົ້ມ ໃນຂອບເຂດທົ່ວປະເທດ.

- ອີງຕາມ ຂໍ້ກຳນົດ ວ່າດ້ວຍ ການຄຸ້ມຄອງການນຳເຂົ້າ ແລະ ຈຳໜ່າຍອາຍແກັສຫຸງຕົ້ມ ສະບັບເລກທີ 0756/ອຄ.ພນ, ລົງວັນທີ 20 ມິຖຸນາ 2001.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການຂຶ້ນທະບຽນວິສາຫະກິດ, ສະບັບເລກທີ 0023/ອຄ.ກທກວ, ລົງວັນທີ 09 ມັງກອນ 2019.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຮັບຮອງກິດຈະການອຸດສາຫະກຳ ແລະ ການຄ້າ ທີ່ຕ້ອງອອກອະນຸຍາດດຳເນີນທຸລະກິດ ສະບັບເລກທີ 0044/ອຄ.ກທກວ, ລົງວັນທີ 18 ມັງກອນ 2019.
- ອີງຕາມ ແຈ້ງການ ຢຸດຕິຊົ່ວຄາວ ການຂຶ້ນທະບຽນວິສາຫະກິດ ການນຳເຂົ້າ ແລະ ຈຳໜ່າຍ ອາຍແກັສຫຸງຕົ້ມ ໃນຂອບເຂດທົ່ວປະເທດ, ສະບັບເລກທີ 0753/ຫອຄ, ລົງວັນທີ 05 ເມສາ 2017.

ກົມການຄ້າພາຍໃນ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍແຈ້ງມາຍັງທ່ານຊາບວ່າ: ປະຈຸບັນ ຢູ່ໃນໄລຍະການປັບປຸງ ຂໍ້ກຳນົດ ວ່າດ້ວຍ ການຄຸ້ມຄອງການນຳເຂົ້າ ແລະ ຈຳໜ່າຍອາຍແກັສຫຸງຕົ້ມ ເປັນ ຂໍ້ຕົກລົງ ວ່າດ້ວຍ ທຸລະກິດອາຍແກັສຫຸງຕົ້ມ. ສະນັ້ນ, ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານ ການຄຸ້ມຄອງອາຍແກັສຫຸງຕົ້ມ ເຂົ້າສູ່ລະບົບ ແລະ ເປັນເອກະພາບ ໃນການຈັດຕັ້ງປະຕິບັດ ຈຶ່ງແຈ້ງມາຍັງທ່ານເພື່ອຈັດຕັ້ງປະຕິບັດ ດັ່ງນີ້:

1. ສືບຕໍ່ ຢຸດຕິຊົ່ວຄາວ ການສ້າງຕັ້ງ ແລະ ດຳເນີນທຸລະກິດ ອາຍແກັສຫຸງຕົ້ມ ຕາມແຈ້ງການ ຂອງຫ້ອງການ ກະຊວງ ອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ 0753/ຫອຄ, ລົງວັນທີ 05 ເມສາ 2017;
2. ການປ່ຽນແປງເນື້ອໃນ ຫຼື ໃບທະບຽນວິສາຫະກິດ ບໍລິສັດ ນຳເຂົ້າ ແລະ ຈຳໜ່າຍອາຍແກັສຫຸງຕົ້ມ ແມ່ນໃຫ້ລໍຖ້າ ຈົນກວ່າຈະສຳເລັດ ການປັບປຸງນິຕິກຳ ເພື່ອໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດ.
3. ສະຫຼຸບສັງລວມ ບໍລິສັດ ທີ່ສ້າງຕັ້ງ ແລະ ດຳເນີນທຸລະກິດ ກ່ອນ ແລະ ຫຼັງ ແຈ້ງການ ສະບັບເລກທີ 0753/ຫອຄ, ລົງວັນທີ 05 ເມສາ 2017 ສົ່ງໃຫ້ກົມການຄ້າພາຍໃນ ບໍ່ກາຍ ວັນທີ 04 ທັນວາ 2020.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຮ. ຫົວໜ້າກົມ

ກົມການຄ້າພາຍໃນ

ຂວັນໃຈ ອຸ່ນສຸທີ


ຕິດຕໍ່ພົວພັນ:
- ພະແນກ ກສລ 021 417843
- ກົມການຄ້າພາຍໃນ 021412436


Scanned with CamScanner

ພະແນກອຸດສາຫະກຳ ແລະ ການຄ້າ
ນະຄອນຫຼວງວຽງຈັນ

ຂາເຂົ້າ | ເລກທີ..2A91...
ວັນທີ..7..11..19..

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ
ພະແນກໄປສະນີ ໂທລະຄົມມະນາຄົມແລະການສື່ສານ

ເລກທີ 583/ພປທສ
ລົງວັນທີ.04 ພະຈິກ 2019

## ໜັງສືທາງລັດຖະການ

ຮຽນ: ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້ານະຄອນຫຼວງວຽງຈັນ ທີ່ນັບຖື

ເລື່ອງ: ໂຈະການພິຈາລະນາອອກອະນຸຍາດວິສາຫະກິດສ່ວນບຸກຄົນຮ້ານອິນເຕີເນັດກາເຟນະຄອນຫຼວງວຽງຈັນ

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງ ປທສ ສະບັບເລກທີ 2232/ປທສ ລົງວັນທີ 29 ສິງຫາ 2019 ວ່າດ້ວຍການຈັດຕັ້ງແລະເຄື່ອນໄຫວຂອງພະແນກ ປທສ ນະຄອນຫຼວງວຽງຈັນ
- ອີງຕາມ ບົດບັນທຶກກອງປະຊຸມລະຫວ່າງພະແນກ ປທສ ນະຄອນຫຼວງຮ່ວມກັບຂະແໜງການກ່ຽວຂ້ອງ ແລະຂອງເຈົ້າເມືອງ 8 ເມືອງໃນນະຄອນຫຼວງວຽງຈັນຄັ້ງວັນທີ 7 ສິງຫາ 2019 ກ່ຽວກັບການຄຸ້ມຄອງ,ກົດລົມ,ແກ້ໄຂບັນຫາ ຮ້ານອິນເຕີເນັດກາເຟນະຄອນຫຼວງວຽງຈັນ.
- ອີງຕາມ ການຕົກລົງເຫັນດີຂອງຄະນະພະແນກ ປທສ ນະຄອນຫຼວງວຽງຈັນໃນ ວັນທີ 29 ຕຸລາ 2019

ພະແນກໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານນະຄອນຫຼວງວຽງຈັນ ຂໍຖືເປັນກຽດແຈ້ງການມາຍັງທ່ານ ຊາບວ່າ ນັບແຕ່ເດືອນ ພະຈິກ ປີ 2019 ເປັນຕົ້ນໄປທາງພະແນກໄປສະນີໂທລະຄົມມະນາຄົມ ແລະ ການສື່ສານນະຄອນຫຼວງວຽງຈັນ ຈະໄດ້ໂຈະການພິຈາລະນາອອກອະນຸຍາດເປີດໃໝ່ໃຫ້ວິສາຫະກິດສ່ວນບຸກຄົນຮ້ານອິນເຕີເນັດກາເຟໄວ້ກ່ອນ, ຍ້ອນວ່າຜ່ານມາມີຈຳນວນຫຼາຍແລ້ວ ໃນນັ້ນມີຮ້ານອິນເຕີເນັດຈຳນວນໜຶ່ງໃຫ້ບໍລິການບໍ່ຖືກຕາມໃບອະນຸຍາດ, ເຄື່ອນໄຫວບໍ່ຖືກຕ້ອງຕາມລະບຽບກົດໝາຍເຮັດໃຫ້ການຄຸ້ມຄອງມີຄວາມຫຍຸ້ງຍາກ, ຈຶ່ງສະເໜີມາຍັງພະແນກອຸດສາຫະກຳ ແລະ ການຄ້ານະຄອນຫຼວງ [redacted].

ດັ່ງນັ້ນ ຈຶ່ງແຈ້ງມາຍັງທ່ານເພື່ອຂໍການຮ່ວມມືໃນການຈັດຕັ້ງປະຕິບັດດັ່ງນີ້ດ້ວຍ.

ຫົວໜ້າພະແນກ

ພະແນກ ໄປສະນີ ໂທລະຄົມມະນາຄົມ ແລະການສື່ສານ
ນະຄອນຫຼວງວຽງຈັນ

ສີດອນ ອ່ອນສີພັນລາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ

ເລກທີ 697 /ຫສນຍ.ກຄສ
ນະຄອນຫຼວງວຽງຈັນ, ວັນທີ 17.5.2018

ກົມ...ສາ...ແຜນການ...
ເລກທີ 1132
ວັນທີ 18/5/18

ກະຊວງ...ກົມແຜນ... ແລະ ສຸ...
ເລກທີ 1272
ວັນທີ 24.5.18

## ແຈ້ງການ

**ຮຽນ:** - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ທີ່ນັບຖື.
- ທ່ານ ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ.

**ເລື່ອງ:** ສະພາບການຄຸ້ມຄອງການດໍາເນີນທຸລະກິດປະກັນໄພ ໃນ ສປປ ລາວ.

- ອີງຕາມ ເອກະສານລາຍງານ ສະບັບເລກທີ 1274/ກງ, ລົງວັນທີ 27 ເມສາ 2018 ຂອງກະຊວງການເງິນ.
- ອີງຕາມ ການຊີ້ນໍາຂອງທ່ານ ຮອງນາຍົກລັດຖະມົນຕີ, ປະທານອົງການກວດກາລັດຖະບານ ຮັກສາການແທນທ່ານ ນາຍົກລັດຖະມົນຕີ ຄັ້ງວັນທີ 11 ພຶດສະພາ 2018.

ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຊີ້ນໍາຂອງທ່ານ ຮອງນາຍົກລັດຖະມົນຕີ, ປະທານອົງການກວດກາລັດຖະບານ ຮັກສາການແທນທ່ານ ນາຍົກລັດຖະມົນຕີ ມາຍັງທ່ານ ຊາບ ດັ່ງນີ້: " **1./ ມອບໃຫ້ກະຊວງການເງິນ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ກວດກາ ແລະ ຊີ້ນໍາປັບປຸງການດໍາເນີນທຸລະກິດປະກັນໄພ ໃຫ້ໄປຕາມກົດໝາຍກໍານົດໄວ້, ດ້ານນິຕິກໍາໃດບໍ່ທັນມີ ກໍໃຫ້ຄົ້ນຄວ້າກໍານົດອອກ ແລະ ຕີລາຄາການປະຕິບັດຂອງບັນດາບໍລິສັດປະກັນໄພ ທີ່ໄດ້ຮັບອະນຸຍາດຜ່ານມາ.**

**2./ ໃຫ້ສືບຕໍ່ໂຈະການຂໍອະນຸຍາດລົງທຶນໃນທຸລະກິດປະກັນໄພ, ສໍາລັບບໍລິສັດ ທີ່ຂໍສ້າງຕັ້ງຂຶ້ນໃໝ່ ຈົນຮອດປີ 2020 ຕາມການສະເໜີຂອງກະຊວງການເງິນ."**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການ ສະບັບນີ້ດ້ວຍ.

**ລັດຖະມົນຕີ,**
**ຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ**

ສໍານັກງານນາຍົກລັດຖະມົນຕີ
ລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ເພັດ ພົມພິພັກ

**ບ່ອນນໍາສົ່ງ**

| | |
|---|---|
| - ທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ ທ່ານລະ | 01 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| ✓ - ກະຊວງອຸດສາຫະກໍາ ແລະ ການຄ້າ | 01 ສະບັບ |
| - ຄະນະ ຫສນຍ ທ່ານລະ | 01 ສະບັບ |
| - ກົມຄົ້ນຄວ້າ-ສັງລວມ | 01 ສະບັບ |
| - ກົມເລຂາ | 01 ສະບັບ |
| - ເກັບມ້ຽນ | 01 ສະບັບ |

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ຫ້ອງການ

ເລກທີ 1930---/ຫກ

ນະຄອນຫຼວງວຽງຈັນ, ວັນທີ 3 ມິຖຸນາ 2019

# ແຈ້ງການ

**ຮຽນ:** ຫົວໜ້າຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ.

**ເລື່ອງ:** ໂຈະຊົ່ວຄາວໃນການຮັບເອກະສານຄຳຮ້ອງຂໍ ດຳເນີນທຸລະກິດ ບໍລິການຈັດຫາງານພາຍໃນ ແລະ ຈັດສົ່ງໄປຕ່າງປະເທດ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍແຮງງານ (ສະບັບປັບປຸງ) ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການສ້າງຕັ້ງ ແລະ ຄຸ້ມຄອງວິສາຫະກິດ ບໍລິການຈັດຫາງານ ສະບັບເລກທີ 043/ຮສສ, ລົງວັນທີ 02 ມັງກອນ 2010;
- ອີງຕາມ ການຕົກລົງເຫັນດີ ຂອງຄະນະນຳກະຊວງ ຄັ້ງວັນທີ 20 ພຶດສະພາ 2019.

ຫ້ອງການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ປະຈຸບັນ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ໂຈະຊົ່ວຄາວໃນການຮັບເອກະສານຄຳຮ້ອງຂໍ ດຳເນີນທຸລະກິດ ບໍລິການຈັດຫາງານພາຍໃນ ແລະ ຈັດສົ່ງໄປຕ່າງປະເທດ ໃນຂອບເຂດທົ່ວປະເທດ, ເນື່ອງຈາກມີຄວາມຈຳເປັນຕ້ອງໄດ້ປັບປຸງບັນດານິຕິກຳ ທີ່ກ່ຽວຂ້ອງກັບການສ້າງຕັ້ງ ແລະ ການດຳເນີນທຸລະກິດການບໍລິການຈັດຫາງານພາຍໃນ ແລະ ສົ່ງໄປຕ່າງປະເທດໃຫ້ຮັດກຸມກ່ອນ. ພາຍຫຼັງປັບປຸງປັບປຸງນິຕິກຳ ສຳເລັດແລ້ວ ຈະມີແຈ້ງການໃໝ່ປ່ຽນແທນ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານເພື່ອຊາບ.

**ຫົວໜ້າຫ້ອງການ**

ລີປາວ ຢ່າງ

ກົມພັດທະນາສີມືແຮງງານ ແລະ ຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ໂທ/ແຟັກ: 021 217738

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 2160 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 19. 12. 2018

ເລກທີ 2846
ວັນທີ 20/12/18

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມສະໜັບສະໜູນ ແລະ ຄຸ້ມຄອງວິສາຫະກິດ
ເລກທີ 3483
ວັນທີ 27-12-18

# ແຈ້ງການ

ຮຽນ : - ທ່ານ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ.
- ທ່ານ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ.
- ທ່ານ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່.

ເລື່ອງ : ທິດຊີ້ນຳກ່ຽວກັບນະໂຍບາຍດັດສົມໂຮງງານຊີມັງ ຢູ່ ສປປ ລາວ.

- ອີງຕາມບົດບັນທຶກກອງປະຊຸມຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ສະບັບ ເລກທີ 18/ຄລທ.ສ, ລົງວັນທີ 26 ພະຈິກ 2018.
- ອີງຕາມທິດຊີ້ນຳ ແລະ ຕົກລົງຂອງທ່ານ ນາຍົກລັດຖະມົນຕີ ໃນວັນທີ 11 ທັນວາ 2018.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງທິດຊີ້ນຳແລະ ຕົກລົງຂອງທ່ານ ນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້ :

1) ເຫັນດີໃຫ້ໂຈະຊົ່ວຄາວ ການອະນຸຍາດໂຄງການໃໝ່ ສຳລັບກິດຈະການໂຮງງານຊີມັງ ເພື່ອດັດສົມບັນໂຮງງານ ທີ່ມີໃນປະຈຸບັນ ໃຫ້ມີຄຸນນະພາບ ແລະ ໄດ້ມາດຕະຖານສາກົນ;

2) ສຳລັບບັນດາກິດຈະການໂຮງງານຊີມັງ ທີ່ໄດ້ຮັບການອະນຸຍາດໄປແລ້ວນັ້ນ ແມ່ນເຫັນດີໃຫ້ເອົາຜູ້ຮ່ວມທຶນ ເພື່ອມາຂະຫຍາຍການຜະລິດ ແລະ ປັບປຸງໃຫ້ມີຄຸນນະພາບ ໂດຍນຳໃຊ້ເຕັກໂນໂລຊີ ທີ່ທັນສະໄໝ ໃຫ້ກ້າວໄປສູ່ມາດຕະຖານ ISO. ພ້ອມດຽວກັນນັ້ນ, ມອບໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ຢັ້ງຢືນຂໍ້ມູນວັດຖຸດິບ ຄື: ຫີນປູນ, ຖ່ານຫີນ ແລະ ດິນໜຽວ ເພື່ອນຳໃຊ້ຜະລິດຊີມັງ ວ່າສາມາດຮັບຮອງໄດ້ອີກຈັກປີ. ພາຍຫຼັງທີ່ໄດ້ຂໍ້ມູນຄົບຖ້ວນແລ້ວ, ຈຶ່ງມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ສັງລວມຂໍ້ມູນດັ່ງກ່າວ ແລ້ວລາຍງານລັດຖະບານ.

ດັ່ງນັ້ນ,ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ສຳນັກງານນາຍົກລັດຖະມົນຕີ
ລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ເພັດ ພົມພິພັກ

ບ່ອນນຳສົ່ງ:

| | |
|---|---|
| 1. ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| 2. ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. ຄະນະ ຫສນຍ | 06 ສະບັບ |
| 4. ກົມກວດກາ, ຫສນຍ | 01 ສະບັບ |
| 5. ສຳເນົາ | 01 ສະບັບ |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 124 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 31. 1. 2020

ເລກທີ 414

ວັນທີ 6.2.20

# ແຈ້ງການ

ຮຽນ:
- ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ ທີ່ນັບຖື.
- ທ່ານ ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ.

ເລື່ອງ: ທິດຊີ້ນຳກ່ຽວກັບການສະເໜີເປີດອະນຸຍາດດຳເນີນທຸລະກິດ ສະຖາບັນການເງິນ ທີ່ບໍ່ແມ່ນທະນາຄານ ບາງຮູບແບບ.

ອີງຕາມ ເອກະສານລາຍງານ ສະບັບເລກທີ 642/ທຫລ, ລົງວັນທີ 24 ທັນວາ 2019 ຂອງທະນາຄານແຫ່ງ ສປປ ລາວ.

ອີງຕາມການຕົກລົງ ແລະ ຊີ້ນຳຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 27-28 ມັງກອນ 2020.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງ ແລະ ຊີ້ນຳຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ມາຍັງທ່ານ ຊາບດັ່ງນີ້:

1. ດ້ານຫລັກການເຫັນດີໃຫ້ເປີດການອະນຸຍາດໃໝ່ສຳລັບສະຖາບັນການເງິນ ທີ່ບໍ່ແມ່ນທະນາຄານ 3 ປະເພດ ຄື: ❶ ສະຖາບັນການເງິນຈຸລະພາກ ທີ່ບໍ່ຮັບເງິນຝາກ, ❷ ໂຮງຊວດຈຳນຳ, ❸ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕາມການສະເໜີ, ແຕ່ການອະນຸຍາດຕົວຈິງ ຕ້ອງມີການກວດກາທາງດ້ານມາດຖານ ແລະ ເງື່ອນໄຂ ຜູ້ທີ່ຈະສະເໜີສ້າງຕັ້ງດຳເນີນທຸລະກິດປະເພດດັ່ງກ່າວນັ້ນ ໃຫ້ລະອຽດ ແລະ ຮັດກຸມ ເພື່ອຮັບປະກັນໃຫ້ສະຖາບັນການເງິນ ທີ່ສ້າງຕັ້ງຂຶ້ນໃໝ່ ມີຄຸນະພາບ ແລະ ເຄື່ອນໄຫວຢ່າງມີປະສິດທິຜົນ ທັງປະຕິບັດກົດໝາຍ ແລະ ລະບຽບການກ່ຽວຂ້ອງຢ່າງເຂັ້ມງວດ ຢ່າງເຂັ້ມງວດ.

ພາຍຫຼັງເປີດການດຳເນີນທຸລະກິດດັ່ງກ່າວ ໄດ້ໄລຍະໜຶ່ງແລ້ວ ໃຫ້ທະນາຄານແຫ່ງ ສປປ ລາວ ສະຫຼຸບຖອດຖອນບົດຮຽນປະສິດທິຜົນການການຈັດຕັ້ງປະຕິບັດ ແລ້ວລາຍງານໃຫ້ລັດຖະບານ ຊາບ ໃນທ້າຍປີ 2020. ພ້ອມກັນນີ້, ກໍ່ໃຫ້ທະນາຄານແຫ່ງ ສປປ ລາວ ສືບຕໍ່ສ້າງຍຸດທະສາດການຄຸ້ມຄອງກອງທຶນບ້ານ ແລະ ປັບປຸງບັນດານິຕິກຳທີ່ກ່ຽວຂ້ອງແຕ່ລະປະເພດ ໃຫ້ສຳເລັດ ແລະ ຮັດກຸມຕື່ມ.

2. ສຳລັບບັນດາສະຖາບັນການເງິນຕ່າງໆ ທີ່ໄດ້ຮັບອະນຸຍາດຜ່ານມາ ມອບໃຫ້ທະນາຄານແຫ່ງ ສປປ ລາວ ສືບຕໍ່ລົງຕິດຕາມ ແລະ ກວດກາ ຢ່າງໃກ້ຊິດ, ຖ້າພົບເຫັນສະຖາບັນໃດ ດຳເນີນບໍ່ໄປຕາມກົດໝາຍ ແລະ ລະບຽບການ ກໍ່ຊຸກຍູ້ໃຫ້ເຂົາເຈົ້າ ຫັນເຂົ້າສູ່ລະບຽບການໃຫ້ຖືກຕ້ອງ. ຖ້າຍັງຝ່າຝືນ ກໍ່ໃຫ້ຍົກເລີກການດຳເນີນທຸລະກິດ ໄດ້.

3. ມອບໃຫ້ ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ ລົງເລິກຊີ້ນຳ ການຈັດຕັ້ງປະຕິບັດຕົວຈິງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການ ສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ສຳນັກງານນາຍົກລັດຖະມົນຕີ

ລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ເພັດ ພົມພິພັກ

ປ່ອນນຳສົ່ງ:

| | |
|---|---|
| 1. ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| 2. ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. ທ່ານ ລັດຖະມົນຕີ ປະຈຳ ສນຍຄ ທ່ານລະ | 01 ສະບັບ |
| 4. ກະຊວງແຜນການ ແລະ ການລົງທຶນ | 01 ສະບັບ |
| 5. ກະຊວງອຸດສາຫະກຳ ແລະ ການຄ້າ | 01 ສະບັບ ✓ |
| 6. ກົມຄົ້ນຄວ້າ-ສັງລວມ, ຫສນຍ | 01 ສະບັບ |
| 7. ສຳເນົາ | 01 ສະບັບ |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ
ພະແນກອຸດສາຫະກຳ ແລະ ການຄ້າ

1633
06-6-19

ເລກທີ 1078 /ອຄ.ນວ.ທຄວ
ລົງວັນທີ...4.......ມິຖຸນາ 2019

# ແຈ້ງການ

ເຖິງ: ທ່ານ ຫົວໜ້າ ຫ້ອງການ ອຸດສາຫະກຳ ແລະ ການຄ້າ 09 ເມືອງ ໃນນະຄອນຫລວງວຽງຈັນ

ເລື່ອງ : ໃຫ້ຢຸດເຊົາຊົ່ວຄາວ ການຮັບແຈ້ງຂຶ້ນທະບຽນ ວິສາຫະກິດສ່ວນບຸກຄົນ ທີ່ມີທຶນຈົດທະບຽນຕໍ່າກວ່າ 500 ລ້ານ ກິດຈະການຂາຍຍ່ອຍນ້ຳມັນເຊື້ອໄຟ

- ອີງຕາມ ກົດໝາຍ ວ່າດ້ວຍວິສາຫະກິດ ສະບັບເລກທີ 46 / ສພຊ,ລົງວັນທີ 26 ທັນວາ 2013
- ອີງຕາມ ດຳລັດ ວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331 / ນຍ, ລົງວັນທີ 27 ຕຸລາ 2017
- ອີງຕາມ ແຈ້ງການ ຫ້ອງການ ກະຊວງ ອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0953 /ຫອຄ.ກຄພນ,ລົງວັນທີ 20 ພຶດສະພາ 2019

ພະແນກ ອຸດສາຫະກຳແລະ ການຄ້າ ນະຄອນຫລວງວຽງຈັນ ຂໍແຈ້ງມາຍັງທ່ານ ຊາບແລະປະຕິບັດ ດັ່ງນີ້ :

ໃຫ້ຢຸດເຊົາຊົ່ວຄາວການຮັບແຈ້ງຂຶ້ນທະບຽນວິສາຫະກິດໃນຮູບແບບວິສາຫະກິດສ່ວນບຸກຄົນ ບຸກຄົນ ທີ່ມີທຶນຈົດທະບຽນຕໍ່າກວ່າ 500 ລ້ານ ກິດຈະການດ້ານ: ການຂາຍຍ່ອຍນ້ຳມັນເຊື້ອໄຟ ເນື່ອງຈາກວ່າ ພະແນກ ອຸດສາຫະກຳ ແລະ ການຄ້ານະຄອນຫລວງວຽງຈັນ ມີແຜນການ ກວດກາຄືນ ແລະ ດັດສົມບັນດາ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ທີ່ມີຢູ່ແລ້ວ ເພື່ອ ອອກອະນຸຍາດດຳເນີນ ກິດຈະການຂາຍຍ່ອຍນ້ຳມັນເຊື້ອໄຟ ໃນໄລຍະນີ້ແມ່ນ ໃຫ້ໂຈະການຮັບເອກະສານຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດກ່ຽວກັບການສ້າງຕັ້ງປ້ຳນ້ຳມັນເຊື້ອໄຟໃນຂອບເຂດ ທົ່ວນະຄອນຫລວງວຽງຈັນ

ດັ່ງນັ້ນ,ຈິ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ຫົວໜ້າ ພະແນກ

ເບີລົມ ເພັດຈັນທະຣາດ

ບ່ອນສົ່ງ

| | |
|---|---|
| 1.ຫ້ອງວ່າການ ປົກຄອງ ນວ | 01ສະບັບ (ເພື່ອລາຍງານ) |
| 2.ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ | 01ສະບັບ (ເພື່ອລາຍງານ) |
| 3.ຫ້ອງການ ອຄ 09 ເມືອງ ເມືອງລະ | 01ສະບັບ (ເພື່ອ ປະຕິບັດ) |
| 4.ຂະແໜງທະບຽນ ແລະ ຄຸ້ມຄອງວິສາຫະກິດ | 01ສະບັບ (ເພື່ອ ສຳເນົາ) |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ
ຫ້ອງການກະຊວງ

ເລກທີ ໙໑໗ /ຫກຊ
ນະຄອນຫຼວງວຽງຈັນ, ວັນທີ 26 ເມສາ 2019

# ແຈ້ງການ

ເຖິງ: ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ.
ເລື່ອງ: ການນຳເຂົ້າ ແລະ ຈຳໜ່າຍຊຸດອຸປະກອນ ຮັບສົ່ງສັນຍານໂທລະພາບ ຜ່ານດາວທຽມຂອງຕ່າງປະເທດ.

- ອີງຕາມແຈ້ງການຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1888/ຫສນຍ.ກຊ, ລົງວັນທີ 14 ທັນວາ 2017;
- ອີງຕາມແຈ້ງການຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 578/ຫສນຍ, ລົງວັນທີ 03 ເມສາ 2019;
- ອີງຕາມຂໍ້ຕົກລົງ ວ່າດ້ວຍການ ກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກອຸປະກອນໄອຊີທີ (ICT) ສະບັບເລກທີ 2118/ປທສ, ລົງວັນທີ 18 ສິງຫາ 2016;
- ອີງຕາມລະບຽບການກ່ຽວກັບການກວດກາ ແລະ ຢັ້ງຢືນ ມາດຕະຖານເຕັກນິກອຸປະກອນ ຮັບສົ່ງສັນຍານໂທລະພາບຜ່ານດາວທຽມ ສະບັບເລກທີ 0492/ກຄຖ, ລົງວັນທີ 19 ເມສາ 2018;

ຫ້ອງການ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຂໍຖືເປັນກຽດແຈ້ງມາຍັງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດດ້ານການຈຳໜ່າຍ ຫຼື ນຳເຂົ້າຊຸດອຸປະກອນ ຮັບສົ່ງສັນຍານໂທລະພາບຜ່ານດາວທຽມຂອງຕ່າງປະເທດ ດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດ ເປັນຕົວແທນຈຳໜ່າຍ ຫຼື ນຳເຂົ້າອຸປະກອນຮັບສົ່ງສັນຍານໂທລະພາບຜ່ານດາວທຽມຂອງຕ່າງປະເທດ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບ ຂໍອະນຸຍາດດຳເນີນກິດຈະການນຳ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
2. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດເປັນຕົວແທນຢ່າງຖືກຕ້ອງນຳ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມີຈຸດປະສົງນຳເຂົ້າ ອຸປະກອນຮັບສົ່ງສັນຍານໂທລະພາບຜ່ານດາວທຽມຂອງຕ່າງປະເທດ ທຸກຄັ້ງກ່ອນນຳເຂົ້າ ຕ້ອງນຳເອົາອຸປະກອນຄົບຊຸດມາຜ່ານການກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກອຸປະກອນໂດຍ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານເສຍກ່ອນ.

ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດແຈ້ງການສະບັບນີ້ ຈະຖືກນຳໃຊ້ມາດຕະການເດັດຂາດຕໍ່ຜູ້ລະເມີດ ໂດຍຍຶດເຄື່ອງທີ່ນຳເຂົ້າມາຢ່າງບໍ່ຖືກຕ້ອງ ຕາມລະບຽບການນັ້ນ ໄວ້ເປັນຂອງລັດ ແລະ ປັບໃໝຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ຮ.ກ. ຫົວໜ້າຫ້ອງການ

ວະສະໄຊ ດາລາລອຍ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, [illegible], ບ້ານ[illegible], ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ
ເບີໂທ: +856 21[illegible] ແຟັກ: +856 21219575

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ກະຊວງ ອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 0753 /ຫອດ.ກຄພນ

ນະຄອນຫຼວງວຽງຈັນ, ວັນທີ: 05 ເມສາ 2017

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ເລກທີ 0931
ວັນທີ 6. 4. 17

## ແຈ້ງການ

ເຖິງ: ທ່ານຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າແຂວງ/ນະຄອນຫຼວງ

ເລື່ອງ: ຢຸດຕິຊົ່ວຄາວ ການຂຶ້ນທະບຽນວິສາຫະກິດ ການນຳເຂົ້າ ແລະ ຈຳໜ່າຍອາຍແກັສຫຸງຕົ້ມ ໃນຂອບເຂດທົ່ວປະເທດ.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ 0346/ອຄ.ກຄພນ, ລົງວັນທີ 15/03/2017 ວ່າດ້ວຍການກຳນົດລາຍການສິນຄ້າຄວບຄຸມລາຄາຂອງຂະແໜງອຸດສາຫະກຳ ແລະ ການຄ້າ.

ເພື່ອເຮັດໃຫ້ວຽກງານການຄຸ້ມຄອງທຸລະກິດນຳເຂົ້າ ແລະ ຈຳໜ່າຍອາຍແກັສຫຸງຕົ້ມ ເຂົ້າສູ່ລະບົບ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດ, ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍແຈ້ງມາຍັງທ່ານ ຊາບ ແລະ ປະຕິບັດດັ່ງນີ້:

1. ໃຫ້ຢຸດຕິຊົ່ວຄາວ ການຂຶ້ນທະບຽນວິສາຫະກິດ ການນຳເຂົ້າ ແລະ ຈຳໜ່າຍອາຍແກັສຫຸງຕົ້ມ ລວມທັງການຂໍອະນຸຍາດສ້າງຕັ້ງສາງເກັບມ້ຽນອາຍແກັສຫຸງຕົ້ມ ຫຼື ໂຮງອັດຊາຍອາຍແກັສຫຸງຕົ້ມ;

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າຫ້ອງການ

ຫ້ອງການ

ມ.ບານສະຕິ ເທບພະວົງ

ບ່ອນສົ່ງ:

1. ທ່ານ ລັດຖະມົນຕີ, ຮອງລັດຖະມົນຕີ ກະຊວງ ອຄ ເພື່ອຊາບ ແລະ ລາຍງານ
2. ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ (ເພື່ອຊາບ ແລະ ໃຫ້ການຮ່ວມມື)
3. ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສລາວ (ເພື່ອຊາບ ແລະ ແຈ້ງໃຫ້ສະມາຊິກ)
4. ສຳເນົາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ເລກທີ 2800 /ຫອຄ
ນະຄອນຫຼວງວຽງຈັນ, ວັນທີ 12 ຕຸລາ 2016

# ແຈ້ງການ

ເຖິງ: - ທ່ານ ຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ໃນທົ່ວປະເທດ;
- ທ່ານ ປະທານສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສລາວ;
- ທ່ານ ຜູ້ອຳນວຍການ ບໍລິສັດນ້ຳມັນເຊື້ອໄຟ.

ເລື່ອງ: ຢຸດຕິຊົ່ວຄາວການຂຶ້ນທະບຽນວິສາຫະກິດ ແລະ ການເຄື່ອນໄຫວຂອງປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟທີ່ບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011;
- ອີງຕາມ ແຈ້ງການຂອງຫ້ອງວ່າການລັດຖະບານ ສະບັບເລກທີ 232/ນຍ, ລົງວັນທີ 22 ກຸມພາ 2016;
- ອີງຕາມ ຂໍ້ຕົກລົງ 1806/ອຄ.ຄພນ, ລົງວັນທີ 08/09/2016 ວ່າດ້ວຍການຄຸ້ມຄອງປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ຢູ່ ສປປ ລາວ.

ເພື່ອປະຕິບັດຕາມແຈ້ງການຂອງຫ້ອງວ່າການລັດຖະບານ ສະບັບເລກທີ 232/ຫລບ, ລົງວັນທີ 22 ກຸມພາ 2016 ກ່ຽວກັບ ການປັບປຸງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ຢູ່ ສປປ ລາວ ຊຶ່ງໄລຍະນີ້ແມ່ນກຳລັງປັບປຸງຮ່າງດຳລັດວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ເຂົ້າຜ່ານກອງປະຊຸມລັດຖະບານອີກຄັ້ງ. ນອກນັ້ນ ຜ່ານການລົງກວດກາສະພາບການສ້າງຕັ້ງ ແລະ ເຄື່ອນໄຫວຂອງປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟຢູ່ບາງແຂວງ/ນະຄອນຫຼວງ ເຫັນວ່າ ມີສະພາບການສ້າງຕັ້ງປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ຢ່າງຫຼວງຫຼາຍ ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການໃນປະຈຸບັນ ເປັນຕົ້ນ ໄລຍະຫ່າງຂອງປ້ຳຕັ້ງໃໝ່ກັບປ້ຳທີ່ມີແລ້ວ, ຕັ້ງໃກ້ກັບຕະຫຼາດ, ໂຮງຮຽນ, ໂຮງໝໍ, ເຂດສະຫງວນຂອງວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ. ການສ້າງຕັ້ງປ້ຳກ່ອນ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການກ່ຽວຂ້ອງ, ແລະ ການເຄື່ອນໄຫວກ່ອນທີ່ບໍ່ທັນໄດ້ຮັບອະນຸຍາດ ຊຶ່ງບັນຫາເຫຼົ່ານີ້ ໄດ້ສ້າງປະກົດການຫຍໍ້ທໍ້ໃນສັງຄົມ, ສ້າງຄວາມຫຍຸ້ງຍາກໃນການຄຸ້ມຄອງ, ການປ້ອງກັນຄວາມສະຫງົບ, ການຕ້ານ ແລະ ສະກັດກັ້ນອັກຄີໄພ ແລະ ທັງເປັນການຝ່າຝືນກົດໝາຍ ແລະ ລະບຽບການ.

**ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍແຈ້ງມາຍັງທ່ານ ປະຕິບັດ ດັ່ງນີ້:**

1. ໃຫ້ຢຸດຕິຊົ່ວຄາວ ການຂຶ້ນທະບຽນວິສາຫະກິດ ແລະ ການເຄື່ອນໄຫວຂອງປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟທີ່ບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;

2. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ປະສານສົມທົບກັບຂະແໜງການໂຍທາທິການ, ຂະແໜງ ຊັບພະຍາກອນ ແລະ ສິ່ງແວດລ້ອມ, ຂະແໜງປ້ອງກັນຄວາມສະຫງົບ ກວດກາຄືນການສ້າງຕັ້ງ ແລະ ເຄື່ອນໄຫວປ້ຳນ້ຳມັນ ເຊື້ອໄຟ ໃຫ້ຖືກຕາມກົດໝາຍ ແລະ ລະບຽບການ ໃນປະຈຸບັນ; ນອກນັ້ນ ຕ້ອງໄດ້ປະສານກັບຂະແໜງການກ່ຽວຂ້ອງ ເພື່ອກຳນົດຈຸດທີ່ຕັ້ງ ແລະ ຈຳນວນຂອງປ້ຳ ແລະ ສາງນ້ຳມັນເຊື້ອໄຟ ຢູ່ພາຍໃນແຂວງຂອງຕົນ;

3. ໃຫ້ເອົາໃຈໃສ່ກວດກາສະຖານທີ່ສ້າງຕັ້ງປ້ຳ ຕ້ອງໃຫ້ມີໄລຍະຫ່າງຈາກປ້ຳທີ່ມີແລ້ວ 1.000 ແມັດ, ຫ່າງຈາກເຂດ ຊຸມຊົນ, ຕະຫຼາດ, ໂຮງຮຽນ, ໂຮງໝໍ, ຫ້ວຍນ້ຳລຳເຊ ... ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ; ສຳລັບການສ້າງຕັ້ງສາງ ນ້ຳມັນເຊື້ອໄຟ ຕ້ອງປະຕິບັດຕາມລະບຽບການຢ່າງເຂັ້ມງວດ;

4. ໃຫ້ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສລາວ ແລະ ບັນດາບໍລິສັດນ້ຳມັນເຊື້ອໄຟ ເອົາໃຈໃສ່ໃນການຄຸ້ມຄອງ ປ້ຳຕົວແບບ ແລະ ປ້ຳຕົວແທນຂອງຕົນ ຢ່າງເຂັ້ມງວດ. ການສ້າງຕັ້ງປ້ຳນ້ຳມັນເຊື້ອໄຟທີ່ເປັນປ້ຳຕົວແບບ ຫຼື ປ້ຳຕົວແທນ ຂອງບໍລິສັດຕົນ ຕ້ອງໃຫ້ມີໄລຍະຫ່າງຕາມທີ່ໄດ້ກຳນົດໄວ້ໃນຂໍ້ 3 ຂ້າງເທິງນີ້, ຖ້າລະເມີດ ຈະຖືກຕັດຕົວເລກແຜນຈຳໜ່າຍ ປະຈຳປີ ແລະ ຈະບໍ່ຂຶ້ນທະບຽນວິສາຫະກິດປ້ຳນ້ຳມັນເຊື້ອໄຟ.

5. ສຳລັບປ້ຳນ້ຳມັນທີ່ກຳລັງດຳເນີນການກໍ່ສ້າງ ຍັງບໍ່ທັນສຳເລັດ, ຖ້າບໍ່ໄດ້ຮັບອະນຸຍາດຈາກຂະແໜງການກ່ຽວຂ້ອງ ໃຫ້ຢຸດຕິຊົ່ວຄາວ ເພື່ອດຳເນີນການຂໍອະນຸຍາດ ຈຶ່ງສາມາດສືບຕໍ່; ຖ້າໄລຍະຫ່າງຂອງປ້ຳ ບໍ່ຖືກຕ້ອງຕາມທີ່ໄດ້ກ່າວມາຂ້າງເທິງ ແມ່ນໃຫ້ຢຸດຕິການກໍ່ສ້າງ ແລະ ເຄື່ອນໄຫວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຮັກສາການ ຫົວໜ້າຫ້ອງການ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ສຸດທະວັນ ມັນທະວົງ

ບ່ອນສົ່ງ:

1. ກະຊວງໂຍທາທິການ ແລະ ຂົນສົ່ງ ເພື່ອຊາບ ແລະ ໃຫ້ການຮ່ວມມື;
2. ກະຊວງຊັບພະຍາກອນ ແລະ ສິ່ງແວດລ້ອມ ເພື່ອຊາບ ແລະ ໃຫ້ການຮ່ວມມື;
3. ກະຊວງປ້ອງກັນຄວາມສະຫງົບ ເພື່ອຊາບ ແລະ ໃຫ້ການຮ່ວມມື;
4. ຫ້ອງວ່າການປົກຄອງແຂວງ ເພື່ອຊາບ ແລະ ໃຫ້ການຮ່ວມມື;
5. ສຳເນົາ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0509/ອຄ.ກຄພນ
ນະຄອນຫຼວງວຽງຈັນ, ວັນທີ 05 ເມສາ 2017

# ແຈ້ງການ

ກະຊວງອຸດສາຫະກຳ ແລະ ການຄ້າ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ຂາເຂົ້າ ເລກທີ 0932
ວັນທີ 6-4-17

ເຖິງ: - ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ໃນທົ່ວປະເທດ;
- ທ່ານ ປະທານ ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສລາວ;
- ທ່ານ ຜູ້ອຳນວຍການ ບໍລິສັດນ້ຳມັນເຊື້ອໄຟ.

ເລື່ອງ: ຢຸດຕິການອະນຸຍາດສ້າງຕັ້ງສາງ ແລະ ປ້ຳນ້ຳມັນເຊື້ອໄຟຊົ່ວຄາວ.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 140/ຫສນຍ.ກລຂ, ລົງວັນທີ 25 ມັງກອນ 2017.

ເພື່ອປະຕິບັດຕາມທິດຊີ້ນຳຂອງແຈ້ງການ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 140/ຫສນຍ.ກລຂ, ລົງວັນທີ 25 ມັງກອນ 2017 "ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຄົ້ນຄວ້າຕັດສົມຄົບຈຳນວນບໍລິສັດທີ່ດຳເນີນທຸລະກິດຂາເຂົ້າ-ຂາອອກນ້ຳມັນເຊື້ອໄຟໃຫ້ເຫຼືອພຽງ 5 ບໍລິສັດເທົ່ານັ້ນ ໂດຍໃຫ້ຖືເອົາລັດວິສາຫະກິດນ້ຳມັນເຊື້ອໄຟລາວ ເປັນບູລິມະສິດ".

ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:

1. ໃຫ້ສືບຕໍ່ຢຸດຕິການອອກອະນຸຍາດຂຶ້ນທະບຽນວິສາຫະກິດ ສ້າງຕັ້ງສາງ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ຕາມແຈ້ງການຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2800/ຫອຄ, ລົງວັນທີ 12 ຕຸລາ 2016;
2. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງສະຫຼຸບລາຍງານ ການອອກອະນຸຍາດການສ້າງຕັ້ງສາງ ແລະ ປ້ຳນ້ຳມັນເຊື້ອໄຟກ່ອນແຈ້ງການສະບັບເລກທີ 2800/ຫອຄ, ລົງວັນທີ 12 ຕຸລາ 2016 ແລະ ຫຼັງແຈ້ງການສະບັບດັ່ງກ່າວ;

3. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ປະສານກັບພາກສ່ວນກ່ຽວຂ້ອງຈັດຕັ້ງປະຕິບັດແຈ້ງການສະບັບນີ້ ຢ່າງເຂັ້ມງວດ ແລະ ມີປະສິດທິຜົນສູງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດໃຫ້ເຂັ້ມງວດ.

ລັດຖະມົນຕີ

ນ. ເຂັມມະນີ ພົນເສນາ

<u>ບ່ອນສົ່ງ:</u>

1. ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ
2. ກະຊວງໂຍທາທິການ ແລະ ຂົນສົ່ງ
3. ກະຊວງຊັບພະຍາກອນ ແລະ ສິ່ງແວດລ້ອມ
4. ກະຊວງປ້ອງກັນຄວາມສະຫງົບ
5. ຫ້ອງວ່າການປົກຄອງແຂວງ, ນະຄອນຫຼວງ
6. ສໍາເນົາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---------------------

ກະຊວງ ອຸດສາຫະກຳ ແລະ ການຄ້າ

ສະບັບເລກທີ່ 2283 /ອຄ.ກອຫ.

ນະຄອນຫຼວງວຽງຈັນ, ວັນທີ່ 01 NOV 2012

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມສົ່ງເສີມການລົງທຶນທົ່ວໄປ
3858
6-11-12

## ແຈ້ງການ

ເຖິງ: ທ່ານຫົວໜ້າກົມສົ່ງເສີມການລົງທຶນທົ່ວໄປ.

- ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງວຽງຈັນ.

ເລື່ອງ: ບໍ່ອະນຸຍາດໃຫ້ຂຶ້ນທະບຽນວິສາຫະກິດ ກ່ຽວກັບໂຮງງານແຍກແຮ່ທາດຫາຍາກ( Rare Earth ) ຢູ່ໃນ ສປປ ລາວ.

- ອີງຕາມດຳລັດວ່າດ້ວຍການສົ່ງອອກຜະລິດຕະພັນແຮ່ທາດ ເລກທີ່ ໑໐/ນຍ, ລົງວັນທີ່ ໑ ມິຖຸນາ 2008.
- ອີງຕາມບົດບັນທຶກຂອງກອງປະຊຸມປຶກສາຫາລືສະພາບການຂໍອະນຸຍາດລົງທຶນສ້າງຕັ້ງໂຮງງານແຍກແຮ່ຫາຍາກ ຢູ່ກົມອຸດສາຫະກຳ ແລະ ຫັດຖະກຳ ໃນວັນທີ່ 28 ມິຖຸນາ 2012.

ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງການມາຍັງກົມສົ່ງເສີມການລົງທຶນທົ່ວໄປ ແລະ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງວຽງຈັນ ຊາບວ່າ: ໃນໄລຍະຜ່ານມາເຫັນວ່າມີນັກທຸລະກິດຈາກຕ່າງປະເທດໄດ້ມີຄວາມສົນໃຈ ແລະ ສະເໜີຂໍຂຶ້ນທະບຽນວິສາຫະກິດ ເພື່ອຂໍລົງທຶນສ້າງຕັ້ງໂຮງງານແຍກແຮ່ທາດຫາຍາກ ( Rare Earth ) ຢູ່ ສປປ ລາວ. ສາຍເຫດຍ້ອນວ່າມີບາງປະເທດໄດ້ປັບປຸງດ້ານນະໂຍບາຍຫ້າມສົ່ງອອກຜະລິດຕະພັນຈາກແຮ່ທາດດັ່ງກ່າວ ແລະ ຫຼາຍປະເທດໄດ້ສ້າງບັນດານິຕິກຳທີ່ເຄັ່ງຄັດ ເພື່ອຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ແລະ ມີຫຼາຍປະເທດບໍ່ອະນຸຍາດໃຫ້ມີການລົງທຶນສ້າງຕັ້ງໂຮງງານແຍກແຮ່ຫາຍາກ ຍ້ອນວ່າການດຳເນີນກິດຈະການໂຮງງານປະເພດນີ້ມັນສ້າງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມສູງ.

ໂດຍອີງໃສ່ທິດທາງນະໂຍບາຍໃນການພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຕ້ອງຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ ແລະ ນະໂຍບາຍການຫັນເປັນອຸດສາຫະກຳສີຂຽວຂອງປະເທດເຮົາ.

ສະນັ້ນ, ເພື່ອຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງແຈ້ງການມາຍັງກົມທີ່ກ່ຽວຂ້ອງ ແລະ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ ບໍ່ໃຫ້ພິຈາລະນາຂຶ້ນທະບຽນວິສາຫະກິດໃຫ້ແກ່ບໍລິສັດທີ່ສະເໜີຂໍລົງທຶນສ້າງຕັ້ງໂຮງງານແຍກແຮ່ທາດຫາຍາກດັ່ງກ່າວ.

ສະນັ້ນ, ຈຶ່ງແຈ້ງການມາຍັງທ່ານ ເພື່ອຈັດຕັ້ງປະຕິບັດວຽກງານດັ່ງກ່າວຢ່າງເຂັ້ມງວດດ້ວຍ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ບ່ອນສົ່ງເອກະສານ:

1. ກົມສົ່ງເສີມການທຶນ, ກະຊວງແຜນການ ແລະ ການລົງທຶນ
2. ກົມສົ່ງເສີມການລົງທຶນທົ່ວໄປ, ກະຊວງ ອ.ຄ.
3. ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງ

ກະຊວງອຸດສາຫະກຳ ແລະ ການຄ້າ
ລັດຖະມົນຕີ

ດຣ. ນາມ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 0788/ຫອຄ.ກຄພນ

ນະຄອນຫລວງວຽງຈັນ, ວັນທີ 11 APR 2017

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ຮັບ ເລກທີ 0970
ວັນທີ 18.04.17

# ແຈ້ງການ

ເຖິງ: [illegible]

ເລື່ອງ: ຢຸດເຊົາ ການພິຈາລະນາ ຂໍອະນຸຍາດ ດຳເນີນທຸລະກິດຂາຍກົງ ຊົ່ວຄາວ ໃນຂອບເຂດທົ່ວປະເທດ.

- ອີງຕາມຂໍ້ຕົກລົງວ່າດ້ວຍທຸລະກິດຂາຍກົງ ສະບັບເລກທີ 0060/ອຄ.ກຄພນ, ລົງວັນທີ 12/01/2017.
- ອີງຕາມທິດຊີ້ນຳຂອງທ່ານຮອງລັດຖະມົນຕີ ຜູ້ຊີ້ນຳກົມການຄ້າພາຍໃນ ຄັ້ງວັນທີ 06/04/2017.

ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດ ແຈ້ງມາຍັງທ່ານ ຊາບວ່າ: ກະຊວງອຸດສາຫະກຳ ແລະ ການຄ້າ ໃນນາມເປັນຜູ້ຄຸ້ມຄອງ ການດຳເນີນທຸລະກິດຂາຍກົງໃນຂອບເຂດທົ່ວປະເທດ ໂດຍປະສານສົມທົບ ກັບ ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ຕາມສິດ ແລະ ພາລະບົດບາດຂອງຕົນ. ປະຈຸບັນນີ້ ກະຊວງອຸດສາຫະກຳ ແລະ ການຄ້າໄດ້ ຢຸດເຊົາ ການພິຈາລະນາ ຂໍອະນຸຍາດ ດຳເນີນທຸລະກິດຂາຍກົງ ຊົ່ວຄາວ ໃນຂອບເຂດທົ່ວປະເທດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ເຜີຍແຜ່ເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

ຫົວໜ້າຫ້ອງການ

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

[illegible]

ປ.ບານສະຫັດ ເທບພະວົງ

ນຳສົ່ງ:
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ
- ຄະນະນຳກະຊວງ ອຄ
- ທະນາຄານແຫ່ງຊາດລາວ
- ພະແນກ ອຄ ແຂວງ, ນະຄອນຫຼວງ
- ຂະແໜງການທີ່ກ່ຽວຂ້ອງ
- ສຳເນົາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງພະລັງງານ ແລະບໍ່ແຮ່

ເລກທີ:....1167..../ພບ.

ນະຄອນຫຼວງວຽງຈັນ, ວັນທີ : 28 MAY 2018

# ແຈ້ງການ

ຮຽນ:
- ທ່ານເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ
- ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ
- ລັດຖະມົນຕີ ກະຊວງການເງິນ
- ລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເລື່ອງ : ການຢຸດຊົ່ວຄາວ ການອະນຸມັດໂຄງການເຂື່ອນໄຟຟ້າຂະໜາດນ້ອຍແຕ່ 15 MW ລົງໄປ ແລະ ການລົງໄປປະຕິບັດການກວດກາທາງດ້ານເຕັກນິກ ແລະນິຕິກຳ ທີ່ໄດ້ຮັບການອະນຸມັດຜ່ານມາ.

- ອີງຕາມ ກົດໝາຍວ່າດ້ວຍໄຟຟ້າ ສະບັບປັບປຸງ ປີ 2017 (ກົດໝາຍໄຟຟ້າ ປີ 2017).
- ອີງຕາມ ແຈ້ງການເລກທີ 1815/ຫສນຍ.ກຄສ, ລົງວັນທີ 10/11/2017, ກ່ຽວກັບການສັ່ງ ໂຈະຊົ່ວຄາວການກໍ່ສ້າງໂຄງການຜະລິດໄຟຟ້າທີ່ຖືກອະນຸມັດ ໂດຍອຳນາດການປົກຄອງທ້ອງຖິ່ນ ແລະ ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ດຳເນີນການກວດກາຄືນໝົດ.
- ອີງຕາມ ຂໍ້ຕົກລົງ ຂອງ ກະຊວງພະລັງງານ ແລະບໍ່ແຮ່ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການກວດກາດ້ານເຕັກນິກໂຄງການເຂື່ອນໄຟຟ້າຂະໜາດນ້ອຍໃນທົ່ວປະເທດ ສະບັບເລກທີ 2680/ພບ, ລົງວັນທີ 17/11/2017.
- ອີງຕາມ ຂໍ້ຕົກລົງ ຂອງ ກະຊວງພະລັງງານ ແລະ ບໍ່ແຮ່ ວ່າດ້ວຍການແຕ່ງຕັ້ງຄະນະ ກຳມະການເກັບກຳຂໍ້ມູນທາງດ້ານນິຕິກຳໂຄງການເຂື່ອນໄຟຟ້າຂະໜາດນ້ອຍ ສະບັບເລກທີ 2686/ພບ, ລົງວັນທີ 17/11/2017.

ມາເຖິງປັດຈຸບັນ, ຫຼາຍແຂວງໄດ້ມີການອະນຸມັດການພັດທະນາໂຄງການເຂື່ອນໄຟຟ້າຂະໜາດນ້ອຍ ໂດຍອີງໃສ່ສິດການອະນຸມັດຕາມກົດໝາຍໄຟຟ້າ ປີ 2012, ແຕ່ຜ່ານການຕິດຕາມກວດກາ ແລະ ຮັບລາຍງານໂຕຈິງ ເຫັນວ່າຫຼາຍໂຄງການໄດ້ຖືກກໍ່ສ້າງ ໂດຍບໍ່ສອດຄ່ອງກັບມາດຕະຖານເຕັກນິກໄຟຟ້າ ແລະ ກົດໝາຍທີ່ກ່ຽວຂ້ອງ ເຊິ່ງເປັນສາເຫດໜຶ່ງເຮັດໃຫ້ການກໍ່ສ້າງມີຄຸນນະພາບຕໍ່າ ມີຄວາມສ່ຽງສູງດ້ານຄວາມປອດໄພໃນເວລາກໍ່ສ້າງ ແລະ ດຳເນີນການຜະລິດ, ເຊິ່ງກໍມີຕົວຢ່າງອຸບັດຕິເຫດຮ້າຍແຮງໃຫ້ໄດ້ເຫັນມາແລ້ວ. ນອກນັ້ນ, ການອະນຸມັດຜ່ານມາກໍບໍ່ເປັນໄປຕາມຂັ້ນຕອນທີ່ລະບຸໄວ້ໃນລະບຽບການ ແລະກົດໝາຍ, ບົດສຶກສາທາງດ້ານເຕັກນິກບໍ່ລະອຽດເຊັ່ນ ຂາດການສຶກສາວິເຄາະປະລິມານນ້ຳທີ່ຊັດເຈນ, ການອອກແບບໂຕເຂື່ອນ ແລະ ປະຕູລະບາຍນ້ຳ ບໍ່ໄປຕາມຫຼັກການດ້ານຄວາມປອດໄພ; ຜົນກະທົບຕໍ່ລະບົບຂອງ ລັດວິສາຫະກິດໄຟຟ້າລາວ ໂດຍສະເພາະ ບັນຫາດ້ານເຕັກນິກການຜະລິດ ແລະ ການຜະລິດໄຟຟ້າຕາມ

ລະດູການ ຂອງໂຄງການຂະໜາດນ້ອຍ ຈຶ່ງເປັນບັນຫາໃຫ້ແກ່ ລັດວິສາຫະກິດໄຟຟ້າລາວ ໃນການບໍລິຫານຄຸ້ມຄອງ ແລະ ຈຳໜ່າຍໄຟຟ້າ ໃຫ້ມີປະສິດຕິຜົນ; ຂາດການປະເມີນວິເຄາະຜົນກະທົບ ແລະ ຜົນໄດ້ຜົນເສຍຈາກໂຄງການ ຢ່າງຮອບດ້ານ ແລະ ຫຼາຍໂຄງການກໍ່ມີການອະນຸມັດທັບຊ້ອນກັນ, ຊຶ່ງເປັນບັນຫາທີ່ຕ້ອງໄດ້ແກ້ໄຂປະຈໍາ; ບາງໂຄງການ ກູ້ຢືມເງິນຈາກລະບົບຂອງທະນາຄານລັດ ແຕ່ໂຄງການບໍ່ໄດ້ມາດຕະຖານ ແລະ ບໍ່ມີປະສິດຕິຜົນ ອາດເຮັດໃຫ້ກາຍເປັນ ໜີ້ເສຍຂອງທະນາຄານ; ການຄຸ້ມຄອງສິ່ງແວດລ້ອມບໍ່ໄດ້ຮັບການເອົາໃຈໃສ່ເທົ່າທີ່ຄວນ.

ເພື່ອເຮັດໃຫ້ການພັດທະນາ ແລະ ກໍ່ສ້າງໂຄງການເຂື່ອນໄຟຟ້າທີ່ອະນຸມັດໂດຍທ້ອງຖິ່ນ ມີຄວາມສອດຄ່ອງກັບ ກົດໝາຍວ່າດ້ວຍໄຟຟ້າສະບັບປີ2017 ຮັບປະກັນໃຫ້ໂຄງການທີ່ກຳລັງກໍ່ສ້າງ,ການປະຕິບັດຕາມລະບຽບ,ກົດໝາຍແລະ ມາດຕະຖານເຕັກນິກ, ລວມທັງເປັນການແກ້ໄຂ ແລະ ປ້ອງກັນບັນຫາປົ່ນອ້ອມທາງລົບ ທີ່ຈະຕາມມາ, ກະຊວງ ພະລັງງານ ແລະ ບໍ່ແຮ່ ຈຶ່ງສະເໜີແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ຄື :

1. ສະເໜີໃຫ້ຫ້ອງວ່າການແຂວງ ແລະ ນະຄອນຫຼວງໃນທົ່ວປະເທດ ປະສານກັບພະແນກການທີ່ກ່ຽວຂ້ອງພາຍໃນ ແລະ ເຈົ້າຂອງໂຄງການ(ຜູ້ພັດທະນາ) ດັ່ງນີ້ :

   - ໃຫ້ຢຸດເຊົາການພິຈາລະນາອະນຸມັດຂໍສຶກສາ ເພື່ອລົງທຶນພັດທະນາໂຄງການຜະລິດໄຟຟ້າ ທີ່ມີກຳລັງຕິດຕັ້ງ 15 MW (ເມກາວັດ) ລົງມາ ເນື່ອງຈາກ ກົດໝາຍໄຟຟ້າ ປີ 2017 ໄດ້ມີການປັບປຸງຂອບເຂດສິດ ແລະ ຂັ້ນຕອນ ໃນການພິຈາລະນາອະນຸມັດໂຄງການຜະລິດໄຟຟ້າຄືນໃໝ່ແລ້ວ ຕາມມາດຕາ 43, 104, 105 ແລະ 106 ຂອງ ກົດໝາຍໄຟຟ້າ ປີ 2017 ທີ່ໄດ້ຖືກຮັບຮອງ ຕາມມະຕິສະພາແຫ່ງຊາດ ເລກທີ 06/ສພຊ ລົງວັນທີ 9/5/2017 ແລະ ປະກາດນຳໃຊ້ໂດຍປະທານປະເທດ ຕາມລັດຖະດຳລັດ ເລກທີ 111/ປປທ ລົງວັນທີ 20/6/2017.
   - ໃນສະເພາະໜ້ານີ້, ການພິຈາລະນາອະນຸມັດໂຄງການຜະລິດໄຟຟ້າ ໂດຍອຳນາດການປົກຄອງທ້ອງຖິ່ນ ແມ່ນ ຈະຖືກປະຕິບັດໃຫ້ສອດຄ່ອງກັບແຜນພັດທະນາໄຟຟ້າຂັ້ນແຂວງ ດັ່ງທີ່ກຳນົດໄວ້ໃນ ມາດຕາ 15, 16 ແລະ 17 ຂອງກົດໝາຍໄຟຟ້າ ປີ 2017 ເທົ່ານັ້ນ.
   - ສຳລັບໂຄງການທີ່ MOU ໄດ້ໝົດອາຍຸແລ້ວ ແມ່ນບໍ່ໃຫ້ມີການຕໍ່ອາຍຸ MOU ອີກ. ສຳລັບໂຄງການ ທີ່ສຳເລັດ ວຽກຕາມ MOU ແລ້ວ ແມ່ນໃຫ້ປະຕິບັດຕາມ ຂໍ້ 2 ຂອງ ແຈ້ງການສະບັບນີ້.

2. ສຳລັບ ໂຄງການທີ່ ອຳນາດການປົກຄອງທ້ອງຖິ່ນໄດ້ເຊັນ MOU ກັບຜູ້ພັດທະນາ ທີ່ຍັງມີອາຍຸຢູ່ ຫຼື ຈະກ້າວສູ່ ສັນຍາຂັ້ນຕໍ່ໄປ ແມ່ນໃຫ້ ພະແນກ ພະລັງງານ ແລະ ບໍ່ແຮ່ ຂອງແຕ່ລະແຂວງ ແລະ ນະຄອນຫຼວງ ສົມທົບກັບ ກົມວິຊາການ ທີ່ກ່ຽວຂ້ອງຂອງກະຊວງ ພະລັງງານ ແລະ ບໍ່ແຮ່ ແລະ ຄະນະກຳມະການທັງ 2 ຄະນະທີ່ ກະຊວງ ພະລັງງານ ແລະ ບໍ່ແຮ່ ໄດ້ແຕ່ງຕັ້ງໄປແລ້ວເພື່ອກວດກາ ເອກະສານ ແລະ ບົດສຶກສາໂຄງການຄືນ ລະອຽດ. ຖ້າຜົນການກວດກາ ເຫັນວ່າ ໂຄງການໄດ້ສຶກສາ ແລະ ອອກແບບຖືກຕ້ອງ ແລະມີຄວາມເປັນໄປໄດ້ ທາງດ້ານເຕັກນິກ-ການເງິນແທ້, ຈຶ່ງຈະໃຫ້ສືບຕໍ່ ໃນຂັ້ນສັນຍາຕໍ່ໄປ ພາຍໃຕ້ເງື່ອນໄຂວ່າ ລັດວິສາຫະກິດໄຟຟ້າ ລາວ ສາມາດຮັບຊື້ໄຟຟ້າ ແລະ ມີຕະຫຼາດຈຳໜ່າຍຮອງຮັບ ລວມທັງໂຄງການສາມາດຮັບຜິດຊອບການກໍ່ສ້າງ ສາຍສົ່ງ ແລະ ໄຟຕິກເຊ່ຍ ແຕ່ເຂື່ອນຈັກເຖິງຈຸດຮັບໄຟຂອງ ລັດວິສາຫະກິດໄຟຟ້າລາວ; ໂດຍໃຫ້ ກົມວິຊາ ການເຂົ້າຮ່ວມໃນການຊ່ວຍເຫຼືອ ກະກຽມການເຈລະຈາສັນຍາໃນຂັ້ນຕໍ່ໄປ ເພື່ອຮັບປະກັນເຮັດໃຫ້ສັນຍາໄດ້ ຮັບການປັບປຸງ ຢ່າງຖືກຕ້ອງເປັນທຳ ລະຫວ່າງ ຜູ້ລົງທຶນ, ຜູ້ຊື້ພະລັງງານ ແລະ ລັດຖະບານ, ໃຫ້ຖືກຕ້ອງ ສອດຄ່ອງກັບ ກົດໝາຍວ່າດ້ວຍໄຟຟ້າ ປີ 2017 ແລະ ກົດໝາຍທີ່ກ່ຽວຂ້ອງ.

3. ສຳລັບໂຄງການ ທີ່ໄດ້ເຊັນສັນຍາຄຸ້ມຄອງໂຄງການແລ້ວ ຕາມກົດໝາຍໄຟຟ້າປີ 2012, ໃຫ້ ພະແນກພະລັງງານ ແລະ ບໍ່ແຮ່ ຂອງແຕ່ລະແຂວງ ແລະ ນະຄອນຫຼວງ ສົມທົບກັບ ກົມວິຊາການ ທີ່ກ່ຽວຂ້ອງ ຂອງ ກະຊວງ ພະລັງງານ ແລະ ບໍ່ແຮ່ ແລະ ຄະນະກຳມະການທັງ 2 ຄະນະທີ່ ກະຊວງ ພະລັງງານ ແລະ ບໍ່ແຮ່ ໄດ້ແຕ່ງຕັ້ງ ປະຕິບັດດັ່ງນີ້ :

- ກວດກາເບິ່ງຄວາມຄືບໜ້າໃນການປະຕິບັດສັນຍາດັ່ງກ່າວ ວ່າຖືກຈັດຕັ້ງປະຕິບັດ ຫຼືບໍ່, ຖ້າຫາກບໍ່ມີການຈັດຕັ້ງປະຕິບັດ ແມ່ນໃຫ້ນຳສະເໜີຕໍ່ ອຳນາດການປົກຄອງທ້ອງຖິ່ນ ພິຈາລະນາຍົກເລີກສັນຍາ ທີ່ມີນັ້ນ.
- ຖ້າໂຄງການມີສັນຍາຄົບຖ້ວນ ລວມທັງມີສັນຍາຊື້-ຂາຍໄຟຟ້າ ກັບ ຟຟລ ແລະ ໄດ້ລົງມືກໍ່ສ້າງແລ້ວ ຫຼື ກຳລັງຈະເລີ່ມກໍ່ສ້າງ, ໃຫ້ຊຸ່ມຊ່ວງເຮັດວຽກກັບຜູ້ພັດທະນາ ໂດຍສົມທົບກັບກົມວິຊາການ ເພື່ອກວດກາຄືນການອອກແບບ ແລະ ວິທີການກໍ່ສ້າງ ຕາມລະບຽບ ແລະ ຂັ້ນຕອນຂອງ ມາດຕະຖານເຕັກນິກຢ່າງເຂັ້ມງວດ. ຖ້າຫາກ ພົບເຫັນບັນຫາຄວາມບໍ່ຖືກຕ້ອງ ແມ່ນໃຫ້ລາຍງານໃຫ້ອຳນາດການປົກຄອງທ້ອງຖິ່ນ ແລະ ກະຊວງ ພະລັງງານ ແລະ ບໍ່ແຮ່ ໄດ້ຮັບຊາບ ພ້ອມສະເໜີ ໃຫ້ຜູ້ພັດທະນາໂຄງການຫາວິທີແກ້ໄຂ ແລະ ຢັ້ງຢືນມາ ໂດຍບໍລິສັດ ຫຼື ສະຖາບັນອອກແບບສາກົນ ທີ່ໜ້າເຊື່ອຖືຕໍ່ກັບ ວິທີແກ້ໄຂດ້ານເຕັກນິກ. ຫ້າມບໍ່ໃຫ້ຜູ້ພັດທະນາສືບຕໍ່ວຽກ ທີ່ຈະກະທົບຕໍ່ບັນຫາຄວາມປອດໄພຂອງໂຄງການ ຫຼື ສັງຄົມ ຈົນກວ່າການແກ້ໄຂບັນຫາຕ່າງໆ ໄດ້ສຳເລັດ.
- ນອກນັ້ນ, ບັນດາຂັ້ນຕອນການໄດ້ມາເຊິ່ງສັນຍາ ລວມທັງບັນດາສັນຍາຄຸ້ມຄອງໂຄງການ ຍັງຕ້ອງໄດ້ຮັບການກວດກາຄືນ ວ່າສອດຄ່ອງກັບ ກົດໝາຍທີ່ກ່ຽວຂ້ອງ ຫຼື ບໍ່ ເຊັ່ນ: ກົດໝາຍວ່າດ້ວຍໄຟຟ້າ ໃນແຕ່ລະໄລຍະ, ກົດໝາຍທີ່ດິນ, ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍນ້ຳ, ກົດໝາຍວ່າດ້ວຍອາກອນ ແລະ ລັດຖະບັນຍັດປະທານປະເທດ ເປັນຕົ້ນ, ຖ້າຫາກ ສັນຍາດັ່ງກ່າວ ຫາກບໍ່ຖືກຕ້ອງ ແມ່ນຕ້ອງໄດ້ດັດແກ້.

ໂຄງການໃດທີ່ບໍ່ທັນໄດ້ຮັບການກວດກາ ແລະ ອະນຸມັດຜ່ານທາງດ້ານເຕັກນິກ ຈາກ ກະຊວງ ພະລັງງານ ແລະ ບໍ່ແຮ່ ແມ່ນບໍ່ໃຫ້ ລັດວິສາຫະກິດໄຟຟ້າລາວ ຮັບຊື້ໄຟຟ້າເດັດຂາດ.

ສຳລັບການຮັບຊື້ໄຟຟ້າຈາກໂຄງການ, ກ່ອນທີ່ຈະມີການສະເໜີ ອະນຸມັດເຊັນບົດບັນທຶກລາຄາໄຟຟ້າ ຫຼື ສັນຍາຊື້ຂາຍ ກັບຜູ້ພັດທະນາໂຄງການແມ່ນໃຫ້ ລັດວິສາຫະກິດໄຟຟ້າລາວ ຄົ້ນຄວ້າພິຈາລະນາ ຢ່າງຮອບດ້ານແລະເຮັດດ້ວຍຄວາມຮັບຜິດຊອບສູງເປັນຕົ້ນ ແມ່ນການສຶກສາຄວາມຕ້ອງການໄຟຟ້າໃນເຂດດັ່ງກ່າວ, ຄວາມພ້ອມຂອງສາຍສົ່ງ,ສະຖຽນລະພາບຂອງລະບົບ,ລາຄາໄຟຟ້າທີ່ບໍ່ສູງແລະລັດວິສາຫະກິດໄຟຟ້າລາວບໍ່ໄດ້ລົງທຶນເພີ່ມ.

ມອບໃຫ້ກົມວິຊາການຂອງ ກະຊວງ ພະລັງງານ ແລະ ບໍ່ແຮ່, ຄະນະເຮັດວຽກຕາມຂໍ້ຕົກລົງ ສະບັບເລກທີ 2680/ພບ ແລະ ສະບັບເລກທີ 2686/ພບ, ລົງວັນທີ 17/11/2017 ແລະ ພະແນກ ພະລັງງານ ແລະ ບໍ່ແຮ່ ແຂວງ ແລະ ນະຄອນຫຼວງ ພ້ອມກັນປະຕິບັດແຈ້ງການສະບັບນີ້ ຕາມພາລະບົດບາດ ແລະຄວາມຮັບຜິດຊອບຢ່າງເຂັ້ມງວດ. ຜ່ານການຈັດຕັ້ງປະຕິບັດ ມີຂໍ້ຫຍຸ້ງຍາກແນວໃດ ໃຫ້ລາຍງານ ກະຊວງພະລັງງານ ແລະ ບໍ່ແຮ່ ຮັບຊາບເປັນປົກກະຕິ ເພື່ອຈະໄດ້ພ້ອມກັນ ສຶກສາ ຄົ້ນຄວ້າ ແລະ ຫາວິທີທາງໃນການແກ້ໄຂບັນຫາໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ກົດໝາຍຕາມແຕ່ລະກໍລະນີ.

ໃຫ້ພະແນກ ພະລັງງານ ແລະບໍ່ແຮ່ ແຂວງ,ນະຄອນຫຼວງ ນຳສົ່ງແຈ້ງການສະບັບນີ້ ໃຫ້ທຸກໂຄງການຮັບຊາບນຳພາຍໃນ 07 ວັນ, ພາຍຫຼັງໄດ້ຮັບແຈ້ງການສະບັບນີ້ເປັນຕົ້ນໄປ.

8. ໃຫ້ຜູ້ພັດທະນາສະໜອງເອກະສານໂຄງການທັງໝົດເປັນຕົ້ນ: ເອກະສານທາງດ້ານນິຕິກຳ ແລະ ເຕັກນິກ ຢ່າງຮີບດ່ວນພາຍໃນ 10 ວັນ ແລະ ໃຫ້ອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມື ແກ່ທີມງານວິຊາການຂອງ ລັດທີ່ໄດ້ຮັບການແຕ່ງຕັ້ງລົງກວດກາ ໃຫ້ສຳເລັດຕາມແຜນ ແລະໄດ້ຮັບຜົນດີ.

**ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ເພື່ອຮັບຊາບ ແລະ ຂໍຄວາມຮ່ວມມືໃນການຈັດຕັ້ງປະຕິບັດດ້ວຍ**

**ລັດຖະມົນຕີ**

**ດຣ.ຄຳມະນີ ອິນທິລາດ**

**<u>ສຳເນົາສົ່ງ</u> :**
- ທ່ານ ຫົວໜ້າຫ້ອງການ, ກົມ, ສະຖາບັນ ອ້ອມຂ້າງ ກະຊວງ ພະລັງງານ ແລະ ບໍ່ແຮ່;
- ທ່ານ ຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ ປະຈຳແຂວງ ແລະ ນະຄອນຫຼວງ;
- ທ່ານ ຜູ້ອຳນວຍການໃຫຍ່ ລັດວິສາຫະກິດອ້ອມຂ້າງ ກະຊວງ ພະລັງງານ ແລະ ບໍ່ແຮ່;

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມອຸດສາຫະກຳ ແລະ ຫັດຖະກຳ

ເລກທີ 1267 /ກອຫ.ສດ

ນະຄອນຫຼວງວຽງຈັນ, ວັນທີ 31 ຕຸລາ 2018

ຮຽນ: - ທ່ານ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ທີ່ເຄົາລົບ ແລະ ນັບຖືຢ່າງສູງ;

- ທ່ານ ຮອງລັດຖະມົນຕີ ຜູ້ຊີ້ນຳກົມອຸດສາຫະກຳ ແລະ ຫັດຖະກຳ, ທີ່ນັບຖືຢ່າງສູງ.

ເລື່ອງ: ສະເໜີໃຈະ ການພິຈາລະນາອະນຸຍາດລົງທຶນໃໝ່ກ່ຽວກັບໂຮງງານ ຜະລິດປລາສຕິກ ທີ່ນຳໃຊ້ເສດປລາສຕິກເປັນວັດຖຸດິບ.

- ອີງຕາມບົດບັນທຶກກອງປະຊຸມປຶກສາຫາລື ກ່ຽວກັບ ການຈຳກັດການນຳໃຊ້ຖົງປລາສຕິກ ແລະ ການຫ້າມນຳເຂົ້າຂີ້ເຫຍື້ອປລາສຕິກສະບັບລົງວັນທີ 22 ມິຖຸນາ 2018.

ກົມອຸດສາຫະກຳ ແລະ ຫັດຖະກຳ ຂໍຖືເປັນກຽດຢ່າງສູງຮຽນລາຍງານມາຍັງທ່ານຊາບອ່າ: ປະຈຸບັນຖົງຢາງປລາສຕິກແມ່ນຖືກນຳໃຊ້ເປັນຈຳນວນຫຼາຍບັນຈຸສິນຄ້າໃນຮ້ານຄ້າ, ຮ້ານສະດວກຊື້, ອາຫານ ແລະ ອື່ນໆ ເນື່ອງຈາກວ່າມີນ້ຳໜັກເບົາ, ລາຄາຖືກ, ສະດວກໃນການໃຊ້ງານ ແລະ ມີຄວາມທົນທານ. ຈາກການສຳຫຼວດກ່ຽວກັບການນຳໃຊ້ຖົງປລາສຕິກຢູ່ໃນໂລກປະມານ 5 ແສນລ້ານ - 1 ລ້ານລ້ານ ຖົງ/ປີ; ສະເລ່ຍ 1 ນາທີແມ່ນໃຊ້ຢ່າງໜ້ອຍ 1 ລ້ານຖົງ. ສຳລັບ ສປປ ລາວ ມີແຫລ່ງທີ່ມາຂອງຖົງຢາງປລາສະຕິກຈາກ 2 ແຫຼ່ງໃຫຍ່ຄື: ນຳເຂົ້າຈາກຕ່າງປະເທດ (ປະເທດໄທ, ຫວຽດນາມແລະອື່ນໆ) ແລະ ຜະລິດຢູ່ພາຍໃນ. ຖ້າທຽບກັບອັດຕາສ່ວນທັງໝົດຂອງຂີ້ເຫຍື້ອທີ່ສ້າງຂຶ້ນມາໃນແຕ່ລະວັນ ຖືວ່າຍັງມີປະລິມານທີ່ໜ້ອຍ, ແຕ່ຂີ້ເຫຍື້ອປລາສະຕິກກໍ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມຫຼາຍພໍສົມຄວນ ເພາະວ່າຖົງປລາສະຕິກຍ່ອຍສະຫຼາຍໃນສິ່ງແວດລ້ອມໃນໄລຍະເວລາປະມານ 100 ປີ ຫຼື ບາງຊະນິດເປັນ 1.000 ປີ ແລະ ການນຳໄປຜະລິດຄືນໃໝ່ແມ່ນເຮັດໄດ້ຍາກ ເນື່ອງຈາກວ່າມີການປົນເປື້ອນກັບຂີ້ເຫຍື້ອຄົວເຮືອນ (ເສດອາຫານ) ແລະ ອື່ນໆ.

ໃນ ສປປ ລາວ ມີໂຮງງານ ປະເພດຜະລິດຄືນໃໝ່ (Recycle) ຫຼາຍແຫ່ງ, ໃນນັ້ນ ໂຮງງານຜະລິດປລາສຕິກ ທີ່ນຳໃຊ້ເສດປລາສຕິກເປັນວັດຖຸດິບແມ່ນມີຫຼາຍພໍສົມຄວນ ແລະ ມີທ່າອ່ຽງການເພີ່ມຂຶ້ນເລື້ອຍໆ, ຊຶ່ງໂຮງງານປະເພດນີ້ ຖືວ່າເປັນໂຮງງານບຳບັດຂີ້ເຫຍື້ອ ແລະ ສາມາດນຳໃຊ້ຊັບພະຍາກອນຢ່າງມີປະສິດທິພາບ, ແຕ່ວ່າວັດຖຸດິບ (ສິ່ງເສດເຫຼືອ) ຢູ່ພາຍໃນປະຈຸບັນແມ່ນບໍ່ພຽງພໍກັບຄວາມຕ້ອງການ ແລະ ໄດ້ມີນຳເຂົ້າມາຈາກຕ່າງປະເທດເຊັ່ນ: ສ.ປ ຈີນ, ການາດາ, ອີຕາລີ, ອາເມລິກາ ແລະ ອື່ນໆ.

ໃນວັນທີ 28 ພຶດສະພາ 2018 ຜ່ານມາກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໂດຍສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າໄດ້ຈັດກອງປະຊຸມປຶກສາຫາລື ກ່ຽວກັບການຈຳກັດການນຳໃຊ້ຖົງປລາສຕິກ ແລະ ການຫ້າມນຳເຂົ້າຂີ້ເຫຍື້ອປລາສຕິກ ໂດຍມີຜູ້ເຂົ້າຮ່ວມຈາກຂະແໜງການທີ່ກ່ຽວຂ້ອງ ລວມທັງໝົດ 27 ທ່ານ. ໃນກອງປະຊຸມຄັ້ງນີ້ໄດ້ມີການປຶກສາຫາລືກ່ຽວກັບການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ໃນການຫຼຸດຜ່ອນການນຳໃຊ້ຖົງປລາສຕິກ ເພື່ອເຮັດໃຫ້ ສປປ ລາວ ບັນລຸຕາມຄຳຂວັນ "ຂຽວ, ສະອາດ, ງາມຕາ", ຊຶ່ງລາຍລະອຽດມີບົດບັນທຶກຂັດຕິດມາພ້ອມນີ້.

ບັນດາໜ້າວຽກທີ່ສຳຄັນຕາມທີ່ກອງປະຊຸມໄດ້ເຫັນດີ ແລະ ເອກະພາບຕາມພາລະບົດບາດຂອງກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອນຳໄປຜັນຂະຫຍາຍໃຫ້ປະກົດຜົນເປັນຈິງມີຄືດັ່ງນີ້:

1. ມາດຕະການໃນການຈັດຕັ້ງປະຕິບັດໄລຍະສັ້ນ:

- ອອກແຈ້ງການເຖິງບັນດາຫ້າງຮ້ານຄ້າ, ຫົວໜ່ວຍທຸລະກິດຕ່າງໆ ເພື່ອໃຫ້ເຂົາເຈົ້າເຂົ້າຮ່ວມຂະບວນການຫຼຸດຜ່ອນການນຳໃຊ້ຖົງປລາສຕິກ.
- ຄົ້ນຄວ້າ, ສຳຫຼວດ ແລະ ເກັບກຳຂໍ້ມູນການຜະລິດ ແລະ ການນຳໃຊ້ຖົງປລາສຕິກ.
- ສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຄົ້ນຄ້ວາລະອຽດເພື່ອອອກແຈ້ງການສະເພາະກ່ຽວກັບການຈຳກັດການນຳໃຊ້ຖົງປລາສຕິກ ແລະ ຮ່ວມກັນກຳນົດລະບຽບການ ກ່ຽວກັບການດຳເນີນທຸລະກິດທີ່ນຳໃຊ້ຂີ້ເຫຍື້ອປລາສຕິກເປັນວັດຖຸດິບ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.
- ຄົ້ນຄວ້າ ແລະ ພິຈາລະນາອອກແຈ້ງການເລື່ອງການໂຈະການພິຈາລະນາການອະນຸມັດສ້າງຕັ້ງໂຮງງານໃໝ່ ກ່ຽວກັບການຜະລິດປລາສຕິກ ທີ່ນຳໃຊ້ສິ່ງເສດເຫຼືອປລາສຕິກເປັນວັດຖຸດິບ ກ່ອນຈະມີລະບຽບຄຸ້ມຄອງສະເພາະອອກມາບັງຄັບໃຊ້.

2. ມາດຕະການໃນການຈັດຕັ້ງປະຕິບັດໄລຍະຍາວ:

- ເກັບກຳຂໍ້ມູນການຜະລິດ, ການນຳເຂົ້າ-ສົ່ງອອກ ແລະ ການນຳໃຊ້ຖົງປລາສຕິກ.
- ສ້າງນິຕິກຳໃນການຄຸ້ມຄອງການຜະລິດ ແລະ ການນຳໃຊ້ຖົງປລາສຕິກ.
- ສົ່ງເສີມຜູ້ປະກອບການ ຜະລິດຖົງທີ່ບໍ່ແມ່ນປລາສຕິກອອກມານຳໃຊ້.
- ສົ່ງເສີມການນຳໃຊ້ວັດສະດຸທົດແທນຖົງຢາງປລາສຕິກ.
- ຊຸກຍູ້ ແລະ ສົ່ງເສີມ ການນຳເອົາຂີ້ເຫຍື້ອປລາສຕິກ ທີ່ມີຢູ່ພາຍໃນປະເທດມາຜະລິດຄືນໃໝ່.

ສະນັ້ນ, ເພື່ອປະຕິບັດຕາມເນື້ອໃນຈິດໃຈຂອງບົດບັນທຶກນັ້ນ ໃຫ້ປະກົດຜົນເປັນຈິງ, ໂດຍສະເພາະມາດຕະການໃນການຈັດຕັ້ງປະຕິບັດໄລຍະສັ້ນ, ຈຶ່ງຂໍຮຽນສະເໜີ ອອກແຈ້ງການໂຈະການພິຈາລະນາອານຸຍາດລົງທຶນໃໝ່ກ່ຽວກັບໂຮງງານຜະລິດປລາສຕິກ ທີ່ນຳໃຊ້ເສດປລາສຕິກເປັນວັດຖຸດິບ ແລະ ເພື່ອຈະໄດ້ດຳເນີນການດັດສົມ ໂຮງງານທີ່ມີຢູ່ແລ້ວໃຫ້ໄດ້ມາດຕະຖານຕາມກະຊວງອຸດສາຫະກຳ ແລະ ການຄ້າກຳນົດໄວ້.

ດັ່ງນັ້ນ, ຈຶ່ງໄດ້ຖືເປັນກຽດຢ່າງສູງຮຽນລາຍງານມາຍັງທ່ານເພື່ອຊາບ ແລະ ຂໍທິດຊີ້ນຳໃນທາງປະຕິບັດຕໍ່ໄປ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

ຫົວໜ້າກົມ

ມະໂນຣັກ ຣາຊະຈັກ

**ສຳເນົາສົ່ງບ່ອນລະ 1 ສະບັບ:**

- **ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ;**
- **ກົມການຄ້າພາຍໃນ;**
- **ກົມການນຳເຂົ້າ ແລະ ສົ່ງອອກ;**
- **ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ;**
- **ສຳເນົາ 3 ສະບັບ.**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# <u>ບົດບັນທຶກ</u>

## ກອງປະຊຸມປຶກສາຫາລື ກ່ຽວກັບ ການຈຳກັດການນຳໃຊ້ຖົງຢາງປລາສຕິກ ແລະ ການຫ້າມນຳເຂົ້າຂີ້ເຫຍື້ອປລາສຕິກ

**ວັນທີ 15 ມິຖຸນາ 2018, ທີ່ຫ້ອງປະຊຸມກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ, ກຊສ**

ໃນວັນສຸກ, ວັນທີ 15 ມິຖຸນາ 2018 ເວລາ 8:30 ໂມງ ຢູ່ທີ່ຫ້ອງປະຊຸມກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ໄດ້ຈັດກອງປະຊຸມປຶກສາຫາລື ກ່ຽວກັບ ການຈຳກັດການນຳໃຊ້ຖົງຢາງປລາສຕິກ ແລະ ການຫ້າມນຳເຂົ້າຂີ້ເຫຍື້ອປລາສຕິກ ພາຍໃຕ້ການເປັນປະທານຮ່ວມ ຂອງ ທ່ານ ນາງ ບຸນຄຳ ວໍລະຈິດ ຮອງລັດຖະມົນຕີ ກຊສ ແລະ ທ່ານ ບຸນມີ ມະນີວົງ ຮອງລັດຖະມົນຕີ ກະຊວງອຸດສະຫະກຳ ແລະ ການຄ້າ (ອຄ) ໂດຍມີຜູ້ຕາງໜ້າຈາກຫ້ອງການ ກຊສ, ກົມຄວບຄຸມມົນລະພິດ, ກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ, ກົມນະໂຍບາຍຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ, ກົມຊັບພະຍາກອນນ້ຳ, ກົມນິຕິກຳ, ສະຖາບັນຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການກອງທຶນປົກປັກຮັກສາສິ່ງແວດ ລ້ອມ, ກົມອຸດສາຫະກຳ ແລະ ຫັດຖະກຳ, ກົມນຳເຂົ້າ ແລະ ສົ່ງອອກ, ກົມສົ່ງເສີມການຄ້າ, ກົມພາສີ, ພະແນກ ອຸດສະຫະກຳ ແລະ ການຄ້າ, ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການກອງຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ ເຂົ້າຮ່ວມທັງໝົດ 27 ທ່ານ (ບັນຊີລາຍຊື່ໄດ້ຄັດຕິດມາພ້ອມນີ້).

ກອງປະຊຸມເລີ່ມຕົ້ນ ໂດຍການກ່າວຈຸດປະສົງ ແລະ ກ່າວມີຄຳຄິດຄຳເຫັນຂອງຄະນະປະທານ, ການສະເໜີຂອງກົມຄວບຄຸມມົນລະພິດ ກ່ຽວກັບສະພາບການນຳໃຊ້, ການຄຸ້ມຄອງຖົງຢາງປລາສຕິກ ແລະ ປະລິມານຂີ້ເຫຍື້ອໃນທົ່ວປະເທດ. ຈາກນັ້ນ ກອງປະຊຸມໄດ້ຄົ້ນຄວ້າ ແລະ ປຶກສາຫາລື ອີງຕາມໜັງສືສະເໜີຂອງທ່ານລັດຖະ ມົນຕີ ກຊສ ສະບັບເລກທີ 2189/ກຊສ, ລົງວັນທີ 28 ພຶດສະພາ 2018 ກ່ຽວກັບການຈຳກັດການນຳໃຊ້ຖົງຢາງ ປລາສຕິກ ແລະ ການຫ້າມນຳເຂົ້າຂີ້ເຫຍື້ອປລາສຕິກ ໂດຍຜູ້ເຂົ້າຮ່ວມທັງໝົດ ໄດ້ປຶກສາຫາລືການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ໃນການຫລຸດຜ່ອນການນຳໃຊ້ຖົງຢາງປລາສຕິກ ເພື່ອເຮັດໃຫ້ ສປປ ລາວ ບັນລຸຄຳຂວັນ ຂຽວ, ສະອາດ, ງາມຕາ. ກອງປະຊຸມໄດ້ເຫັນດີ ແລະ ເປັນເອກະພາບ ຕໍ່ເນື້ອໃນການສະເໜີຂອງທ່ານ ຮອງລັດຖະມົນຕີ ອຄ ແລະ ທ່ານຮອງລັດຖະມົນຕີ ກຊສ ເພື່ອນຳເອົາໄປພັນຂະຫຍາຍໃຫ້ປະກົດຜົນເປັນຈິງ ຕາມພາລະບົດບາດຂອງແຕ່ລະພາກສ່ວນທີ່ກ່ຽວຂ້ອງ ດັ່ງລຸ່ມນີ້:

### I. ມາດຕະການໃນການຈັດຕັ້ງປະຕິບັດໄລຍະສັ້ນ

1) ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການເຖິງບັນດາຮ້ານຄ້າ, ຫົວໜ່ວຍທຸລະກິດຕ່າງໆ ເຂົ້າຮ່ວມໃນການຫລຸດຜ່ອນການນຳໃຊ້ຖົງຢາງປລາສຕິກ;
2) ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສືບຕໍ່ໂຄສະນາເຜີຍແຜ່ໃຫ້ຄວາມຮູ້ ແລະ ປູກຈິດສຳນຶກ ກ່ຽວກັບ ການນຳໃຊ້ຖົງຢາງປລາສຕິກ ແລະ ຜົນຮ້າຍຈາກການນຳໃຊ້ຖົງຢາງປລາສຕິກ ແລະ ຢ້ອງຢໍ

ແກ່ບັນດາຜູ້ທີ່ມີຜົນງານດີເດັ່ນທີ່ເຂົ້າຮ່ວມໃນໂຄງການຕົວແບບ ການຫລຸດຜ່ອນການນຳໃຊ້ຖົງຢາງ ປລາສຕິກ ໃຫ້ທົ່ວສັງຄົມຢ່າງກວ້າງຂວາງ;

3) ຂະແໜງການຕ່າງໆທີ່ກ່ຽວຂ້ອງ ຄົ້ນຄວ້າ, ສຳຫຼວດ ແລະ ເກັບກຳຂໍ້ມູນການຜະລິດ ແລະ ການນຳໃຊ້ຖົງຢາງປລາສຕິກ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ ໃນຂອບເຂດທົ່ວປະເທດ;

4) ກະຊວງອຸດສາຫະກຳ ແລະ ການຄ້າ ປະຕິບັດວຽກງານ ສົມທົບກັບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຄົ້ນຄວ້າລະອຽດເພື່ອອອກແຈ້ງການສະເພາະ ກ່ຽວກັບ ການຈຳກັດການນຳໃຊ້ຖົງຢາງປລາສຕິກ ແລະ ຮ່ວມກັນກຳນົດລະບຽບການ ກ່ຽວກັບ ການດຳເນີນທຸລະກິດທີ່ນຳໃຊ້ຂີ້ເຫຍື້ອປລາສຕິກເປັນວັດຖຸດິບ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ;

5) ກະຊວງອຸດສາຫະກຳ ແລະ ການຄ້າ ຄົ້ນຄວ້າ ແລະ ພິຈາລະນາອອກແຈ້ງການ ໃຈະການພິຈາລະນາ ການອະນຸມັດການສ້າງຕັ້ງໂຮງງານໃຫມ່ ກ່ຽວກັບ ການຜະລິດປລາສຕິກ ທີ່ນຳໃຊ້ສິ່ງເສດເຫຼືອປລາສຕິກເປັນວັດຖຸດິບ ກ່ອນຈະມີລະບຽບການຄຸ້ມຄອງສະເພາະອອກມາບັງຄັບໃຊ້.

## II. ມາດຕະການໃນການຈັດຕັ້ງປະຕິບັດໄລຍະຍາວ

1) ສ້າງຍຸດທະສາດ ກ່ຽວກັບການຄຸ້ມຄອງ, ການນຳໃຊ້, ການຜະລິດ ແລະ ການກຳຈັດຂີ້ເຫຍື້ອປລາສຕິກໃນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ;

2) ສ້າງລະບຽບການສະເພາະ ເພື່ອກຳນົດມາດຕະການໃນການຄຸ້ມຄອງ, ການນຳໃຊ້, ການຜະລິດ ແລະ ການກຳຈັດຂີ້ເຫຍື້ອປລາສຕິກ ໃຫ້ເປັນເອກະພາບໃນການຈັດຕັ້ງປະຕິບັດ;

3) ສືບຕໍ່ສ້າງຄວາມເຂັ້ມແຂງ ໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ, ປຸກຈິດສຳນຶກໃຫ້ຜູ້ບໍລິໂພກ ໃນການສ່ວນຮ່ວມຫຼຸດຜ່ອນການນຳໃຊ້ຖົງຢາງປລາສຕິກ;

4) ແບ່ງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ ໂດຍອີງໃສ່ພາລະບົດບາດຂອງຂະແໜງການຕ່າງໆທີ່ກ່ຽວຂ້ອງ ເປັນຕົ້ນ:

ກ) ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີໜ້າທີ່:

- ສຳຫຼວດ ແລະ ເກັບກຳຂໍ້ມູນຂີ້ເຫຍື້ອປລາສຕິກ ໃນຂອບເຂດທົ່ວປະເທດ;
- ສ້າງຍຸດທະສາດ ກ່ຽວກັບການການຄຸ້ມຄອງ, ການນຳໃຊ້, ການຜະລິດ ແລະ ການກຳຈັດຂີ້ເຫຍື້ອປລາສຕິກ;
- ໂຄສະນາເຜີຍແຜ່ ຜົນກະທົບຈາກການນຳໃຊ້ຖົງຢາງປລາສະຕິກ;
- ສົ່ງເສີມການແຍກຂີ້ເຫຍື້ອແຕ່ລະປະເພດ ເພື່ອການນຳໃຊ້ຄືນ ແລະ ການນຳເອົາມາຜະລິດຄືນໃໝ່ໃຫ້ໄດ້;
- ກົມຄວບຄຸມມົນລະພິດ, ກຊສ ປະສານກັບກະຊວງກ່ຽວຂ້ອງ ເປັນຕົ້ນ: ກະຊວງ ສາທາລະນະສຸກ, ກະຊວງ ການເງິນ, ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ, ແລະ ກະຊວງ ກະສິກຳ ແລະ ປ່າໄມ້ ເພື່ອປຶກສາຫາລື ແລະ ແບ່ງຄວາມຮັບຜິດຊອບ ຈັດຕັ້ງປະຕິບັດໃນວຽກງານດັ່ງກ່າວ.

ຂ) ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ມີໜ້າທີ່:

- ສ້າງລະບຽບການ ແລະ ກຳນົດມາດຕະຖານ ໂດຍອີງໃສ່ມາດຕະຖານຕ່າງປະເທດ, ພາກພື້ນ ແລະ ສາກົນ ເຊັ່ນ: ການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ເພື່ອປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສຸຂະພາບຂອງຄົນ.

ຄ) ກະຊວງ ອຸດສາຫະກຳ ແລະ ການຄ້າ ມີໜ້າທີ່:

- ເກັບກຳຂໍ້ມູນການຜະລິດ, ການນຳເຂົ້າ-ສົ່ງອອກ ແລະ ການນຳໃຊ້ຖົງຢາງປລາສຕິກ ໃນຂົງເຂດອຸດສາຫະກຳ ແລະ ການຄ້າ;
- ສ້າງນິຕິກຳ ໃນການຄຸ້ມຄອງການຜະລິດ ແລະ ການນຳໃຊ້ຖົງຢາງປລາສຕິກ ຂົງເຂດອຸດສາຫະກຳ ແລະ ການຄ້າ;
- ສົ່ງເສີມຜູ້ປະກອບການ ຜະລິດຖົງທີ່ບໍ່ແມ່ນປລາສຕິກອອກມານຳໃຊ້;
- ສົ່ງເສີມ ການນຳໃຊ້ວັດສະດຸທົດແທນຖົງຢາງປລາສຕິກ;
- ຊຸກຍູ້ ແລະ ສົ່ງເສີມ ການນຳເອົາຂີ້ເຫຍື້ອປລາສຕິກ ມາຜະລິດຄືນໃໝ່ ໂດຍນຳໃຊ້ວັດຖຸດິບຂີ້ເຫຍື້ອປລາສຕິກພາຍໃນປະເທດ.

ກອງປະຊຸມໄດ້ປິດລົງໃນເວລາ 11:00 ຂອງວັນດຽວກັນ.

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກກອງປະຊຸມສະບັບນີ້ໄວ້ ເພື່ອເປັນຫຼັກຖານ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ.

ນະຄອນຫຼວງວຽງຈັນ ວັນທີ່ 22 ມິຖຸນາ 2018

ຜູ້ບັນທຶກ

ເພາະຣັກ ພອນແກ້ວ

ຮອງລັດຖະມົນຕີ
ກະຊວງ ອຸດສະຫະກຳ ແລະ ການຄ້າ

ບຸນມີ ນະພົ່ວງ

ຮອງລັດຖະມົນຕີ
ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ບ.ບຸນຄຳ ວໍລະຈິດ